ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

09-12 ກັນຍາ 2022
ປີທີ 11
ສະບັບທີ 874

## ປະທານສະພາແຫ່ງຊາດ ພົບປະພະນັກງານຫລັກແຫລ່ງກະຊວງເຕັກໂນໂລຊີ ແລະ ການສື່ສານ




(ສພຊ) ວັນທີ 7 ກັນຍາ ຜ່ານມາ, ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 1 ນະຄອນຫລວງວຽງຈັນ ນຳໂດຍທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ, ພ້ອມດ້ວຍທ່ານ ເກດແກ້ວ ສີຫາລາດ ຮອງປະທານກຳມາທິການເສດຖະກິດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ, ທ່ານ ນາງ ເກດມະນີ ບັນດາສັກ ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ສະພາປະຊາຊົນນະຄອນຫລວງວຽງຈັນ ໄດ້ລົງເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ກອງປະຊຸມສະພາປະຊາຊົນນະຄອນຫລວງວຽງຈັນ ຊຸດທີ II ທີ່ກະຊວງເຕັກໂນໂລຊີ ແລະ ການສື່ສານ ເຂົ້າຮ່ວມມີທ່ານ ບໍ່ວຽງຄຳ ວົງດາລາ ລັດຖະມົນຕີກະຊວງເຕັກໂນໂລຊີ ແລະ ການສື່ສານ ພ້ອມດ້ວຍພະນັກງານຫລັກແຫລ່ງພາຍໃນກະຊວງ ລວມທັງໝົດ 100 ກວ່າທ່ານ.

ການພົບປະຜູ້ມີສິດເລືອກຕັ້ງຄັ້ງນີ້, ຄະນະ ໄດ້ຮັບຟັງການລາຍງານສະພາບພົ້ນເດັ່ນຂອງການເຄື່ອນໄຫວນຳພາ-ຊີ້ນຳ ວຽກງານຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ; ຈາກນັ້ນ, ບັນດາທ່ານສະມາຊິກສະພາແຫ່ງຊາດ ໄດ້ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ກອງປະຊຸມສະພາປະຊາຊົນນະຄອນຫລວງວຽງຈັນ ຊຸດທີ II ພ້ອມທັງຮັບຟັງຄຳຄິດຄຳເຫັນ, ຄຳສະເໜີຕ່າງໆ ຂອງຜູ້ມີສິດເລືອກຕັ້ງ ເພື່ອນຳໄປໃຫ້ພາກສ່ວນກ່ຽວຂ້ອງພິຈາລະນາແກ້ໄຂ.

ໂອກາດດັ່ງກ່າວ, ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ມີຄຳເຫັນໂອ້ລົມຕໍ່ຄະນະພັກ, ຄະນະນຳ ແລະ ພະນັກງານຫລັກແຫລ່ງກະຊວງເຕັກໂນໂລຊີ ແລະ ການສື່ສານ ວ່າ: ຄະນະພັກ, ຄະນະນຳຂອງກະຊວງເຕັກໂນໂລ

ອ່ານຕໍ່ໜ້າ 2

## ສສຊ ພົບປະຜູ້ມີສິດເລືອກຕັ້ງຢູ່ເຂດບ້ານຕຳລອງ


ໜ້າ 2

## ຮອງປະທານ ສພຊ ຕ້ອນຮັບການເຂົ້າຢ້ຽມຂ່ຳນັບຂອງຜູ້ອຳນວຍການ UNDP



(ສພຊ) ວັນທີ 6 ກັນຍາ ຜ່ານມາ, ທີ່ສະພາແຫ່ງຊາດ (ສພຊ) ທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍການນຳຂັ້ນສູງຂອງສະພາແຫ່ງຊາດ ແຫ່ງ ສປປລາວ ໄດ້ຕ້ອນຮັບການເຂົ້າຢ້ຽມຂ່ຳນັບຂອງທ່ານ ນາງ ຄານນີ ວິຍາຣາຈາ ຜູ້ຊ່ວຍເລຂາທິການໃຫຍ່ອົງການ

ອ່ານຕໍ່ໜ້າ 3

## ປະທານ ກສຕສ ສືບຕໍ່ພົບປະຜູ້ມີສິດເລືອກຕັ້ງຢູ່ ນວ



ໜ້າ 2

## ສະມາຄົມມິດຕະພາບ ລາວ-ກູບາ ໄດ້ຮັບຫລຽນໄຊສາມັກຄີຈາກລັດຖະບານ ສ.ກູບາ




(ສພຊ) ວັນທີ 4 ກັນຍາ 2022, ທີ່ຫໍສະພາແຫ່ງຊາດ ສະມາຄົມມິດຕະພາບ ລາວ-ກູບາ ຮ່ວມກັບສະຖານເອກອັກຄະລັດຖະທູດ ແຫ່ງ ສ.ກູບາ ປະຈຳລາວ ໄດ້ຈັດພິທີມອບຫລຽນໄຊສາມັກຄີ ຂອງລັດຖະບານ ສ.ກູບາ ແລະ ຫລຽນກາລະນຶກ 60 ປີ ຂອງສະຖາບັນກູບາເພື່ອມິດຕະພາບກັບນາໆຊາດ (ICAP) ໃຫ້ແກ່ສະມາຄົມມິດຕະພາບ ລາວ-ກູບາ. ສະຫາຍ

ອ່ານຕໍ່ໜ້າ 3

## ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຊ ແລະ ສພຂ


ໜ້າ 2

## ສຳເລັດສຳມະນາຜົນການນຳເອົາຮ່າງປຶ້ມຄູ່ມື 2 ສະບັບ ຂອງ ສພຊ ທົດລອງຢູ່ 2 ແຂວງ

(ສພຊ) ເພື່ອຮັບປະກັນໃຫ້ແກ່ການຈັດກອງປະຊຸມສຳມະນາກ່ຽວກັບຜົນການນຳເອົາຮ່າງປຶ້ມຄູ່ມື 2 ສະບັບ ຂອງສະພາແຫ່ງຊາດ ໄປຈັດຕັ້ງປະຕິບັດທົດລອງ ຂອງສະມາຊິກສະພາປະຊາຊົນແຂວງ ຢູ່ບັນດາເມືອງຂອງແຂວງຊຽງຂວາງ ແລະ ແຂວງ

ອ່ານຕໍ່ໜ້າ 3




ໜ້າ 4


ໜ້າ 4


ໜ້າ 4


ໜ້າ 5


ໜ້າ 5


ໜ້າ 5

## ປະທານ...

ຊີ ແລະ ການສື່ສານ ເຊິ່ງເປັນກະຊວງທີ່ມີຄວາມສຳຄັນ ແລະ ເປັນໃຈກາງໃນການຊຸກຍູ້ການສ້າງສາພັດທະນາເສດຖະກິດ-ສັງຄົມ ຈະຕ້ອງໄດ້ເພີ່ມທະວີຄວາມສາມັກຄີພາຍໃນເປັນປຶກແຜ່ນ, ບຸກບືນສູ້ຊົນຈັດຕັ້ງປະຕິບັດບັນດາວຽກງານ ໃຫ້ບັນລຸຕາມແຜນການ; ສະເໜີໃຫ້ຄະນະພັກ, ຄະນະນຳສືບຕໍ່ຄົ້ນຄວ້າ, ປັບປຸງລະບົບກົງຈັກການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົງຈັກເສນາທິການໃຫ້ມີປະສິດທິພາບ, ແກ້ໄຂສະພາບການຊໍ້າຊ້ອນດ້ານພາລະບົດບາດ ໃຫ້ຈະແຈ້ງ ແລະ ຮັດກຸມ, ເຮັດໃຫ້ກົງຈັກກະທັດຮັດ, ສົມເຫດສົມຜົນ, ເປັນລະບົບໂລ່ງລ່ຽນ; ພ້ອມກັນນັ້ນ, ກໍໃຫ້ເອົາໃຈໃສ່ວຽກງານການພັດທະນາຊັບພະຍາກອນມະນຸດ ໃຫ້ແກ່ພະນັກງານ-ລັດຖະກອນຢູ່ແຕ່ລະຂົງເຂດ ໃຫ້ມີຄຸນນະພາບ, ມີຄວາມໜັກແໜ້ນ ຈັນຍາບັນຈັນຍາທຳ, ຮັບໃຊ້ປະຊາຊົນຢ່າງຕັ້ງໜ້າ ບໍ່ມີເງື່ອນໄຂ, ສາມາດຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງວຽກງານໄລຍະໃໝ່; ເພີ່ມທະວີຄວາມເອົາໃຈໃສ່ ໃນການຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ເຂົ້າໃນການສ້າງລັດທີ່ປົກຄອງດ້ວຍກົດໝາຍ ໃນຂົງເຂດວຽກງານເຕັກໂນໂລຊີ ແລະ ການສື່ສານ ໃຫ້ເຂົ້າສູ່ລວງເລິກ ດ້ວຍການຈັດຕັ້ງປະຕິບັດແຜນການສ້າງ ແລະ ປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍ ໃຫ້ບັນລຸຕາມແຜນການທີ່ວາງໄວ້ ແລະ ຮັບປະກັນການເຊື່ອມໂຍງກັບພາກພື້ນ ແລະ ສາກົນ; ຄົ້ນຄວ້າກຳນົດເນື້ອໃນຂອງກົດໝາຍ ໃຫ້ມີຄວາມຮັດກຸມ ສາມາດເປັນບ່ອນອີງໃນການແກ້ໄຂບັນຫາທີ່ເກີດຂຶ້ນໃນຂົງວຽກງານຂອງຕົນໄດ້ຢ່າງມີປະສິດທິພາບ. ເພື່ອເຮັດໃຫ້ການນຳໃຊ້ລະບົບເອເລັກໂຕຣນິກທີ່ທັນສະໄໝ ເຂົ້າໃນການຄຸ້ມຄອງອາກອນ ແມ່ນສະເໜີໃຫ້ກະຊວງເຕັກໂນໂລຊີ ແລະ ການສື່ສານ ສືບຕໍ່ປະສານສົມທົບກັບກະຊວງການເງິນ, ທະນາຄານ ຄົ້ນຄວ້າແຜນການເກັບລາຍຮັບໃຫ້ເປັນທັນສະໄໝ, ມີມາດຖານ ສາມາດເຊື່ອມຕໍ່ລະບົບເກັບພາສີ-ອາກອນເຂົ້າກັບທຸກຂະແໜງການຢ່າງມີມາດຕະຖານໃຫ້ໄດ້ຮັບຜົນສຳເລັດ, ສາມາດແກ້ໄຂບັນຫາທີ່ເກີດຂຶ້ນໃນໄລຍະຜ່ານມາ. ການນຳໃຊ້ອຸປະກອນເອເລັກໂຕຣນິກ ເຂົ້າໃນການເຄື່ອນໄຫວວຽກງານດ້ານການຄ້າ, ການຊື້-ຂາຍສິນຄ້າ, ການເຮັດທຸລະກຳທາງດ້ານການເງິນ, ການຝາກເງິນ, ການກູ້ຢືມເງິນ ແລະ ອື່ນໆ ມີທ່າອ່ຽງນັບມື້ເພີ່ມຂຶ້ນ ເຊິ່ງໃນນີ້ ໄດ້ເກີດມີການສວຍໃຊ້ຊ່ອງວ່າງ ເພື່ອກໍ່ອາຊະຍາກຳໃນຮູບແບບຕ່າງໆ ເພື່ອແກ້ໄຂບັນຫາດັ່ງກ່າວ ຈຶ່ງສະເໜີໃຫ້ກະຊວງເຕັກໂນໂລຊີ ແລະ ການສື່ສານ ເພີ່ມທະວີການຄົ້ນຄວ້າດ້ານເຕັກນິກ ເພື່ອຄວບຄຸມການນຳໃຊ້ອຸປະກອນເອເລັກໂຕຣນິກ ເຂົ້າໃນການກໍ່ອາຊະຍາກຳ, ສ້າງລະບົບຕິດຕາມ ເພື່ອຊ່ວຍໃນການເກັບກຳຂໍ້ມູນຫລັກຖານ ໃນກໍລະນີທີ່ມີບັນຫາຕ່າງໆເກີດຂຶ້ນ.

(ກົງທະນູຄຳ ພິພັດເສລີ)






## ສສຊ...

(ສພຊ) ວັນທີ 5 ກັນຍາ ຜ່ານມາ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ ທັງເປັນສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ ພ້ອມດ້ວຍ ສສຊ ປະຈຳເຂດເລືອກຕັ້ງ ແລະ ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງນອງ ພ້ອມດ້ວຍຄະນະ ໄດ້ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດຊຸດທີ IX ແລະ ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງສະຫວັນນະເຂດ ຊຸດທີ II ແລະ ພົບປະຜູ້ມີສິດເລືອກຕັ້ງຢູ່ເຂດໂຮງຮຽນປະຖົມສົມບູນນາກອງເຂດຕຳລວງ ເມືອງນອງ ແຂວງສະຫວັນນະເຂດ ເຊິ່ງລວມມີປະຊາຊົນຈາກ 7 ບ້ານ ເຂົ້າຮ່ວມທັງໝົດ 260 ຄົນ ຍິງ 74 ຄົນ.

ການເຄື່ອນໄຫວເຮັດວຽກຄັ້ງນີ້, ຄະນະ ໄດ້ຮັບຟັງການລາຍງານໂດຍຫຍໍ້ຈາກຜູ້ຕາງໜ້າຂອງເຂດຕຳລວງ ກ່ຽວກັບການພັດທະນາເສດຖະກິດ-ສັງຄົມ ຮອບດ້ານຂອງກຸ່ມບ້ານໂດຍຫຍໍ້; ຈາກນັ້ນ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ຕາງໜ້າສະມາຊິກສະພາປະຊາຊົນແຂວງ ໄດ້ລາຍງານຫຍໍ້ກ່ຽວກັບຜົນສຳເລັດຂອງ 2 ກອງປະຊຸມດັ່ງກ່າວ.

ໂອກາດນີ້, ທ່ານຮອງປະທານສະພາແຫ່ງຊາດ ໄດ້ມີຄຳເຫັນຊີ້ນຳໃຫ້ແກ່ເຂດຕຳລວງ ເຊິ່ງໄດ້ສະແດງຄວາມຊົມເຊີຍຕໍ່ຄະນະພັກ ທີ່ໄດ້ເອົາໃຈໃສ່ຊີ້ນຳ-ນຳພາ ປະຊາຊົນໃນການສ້າງສາພັດທະນາເຂດຕຳລວງ ແລະ ໄດ້ຮຽກຮ້ອງໃຫ້ປະຊາຊົນເອົາໃຈໃສ່ສ້າງເສດຖະກິດຄອບຄົວ ເພື່ອໃຫ້ຫລຸດພົ້ນອອກຈາກຄວາມທຸກຍາກ, ໃຫ້ຊາວໜຸ່ມຫ່າງໄກຢາເສບຕິດ, ເສີມຂະຫຍາຍທ່າແຮງໃນການປູກຝັງ, ສົ່ງເສີມຫັດຖະກຳ , ປູກກ້ວຍ, ມັນຕົ້ນ, ຕໍ່າຫູກທໍ່ໄໝ ໃຫ້ກາຍເປັນສິນຄ້າໜຶ່ງຜະລິດຕະພັນຂອງເມືອງ ແລະ ໃຫ້ປະຊາຊົນມີຄວາມເປັນເຈົ້າການໃນການມີຊີວິດທີ່ສະອາດ, ຫັນມານຳໃຊ້ວິດຖ່າຍຫລາຍຂຶ້ນ ເພື່ອບໍ່ໃຫ້ເກີດພະຍາດຕິດແປດ ພ້ອມທັງຈະໄດ້ຊຸກຍູ້ໃຫ້ສະພາແຫ່ງຊາດ ຕິດຕາມກວດກາໃຫ້ເປັນປົກກະຕິ ເພື່ອພັດທະນາໂຄງລ່າງຂອງບ້ານໃຫ້ຫລາຍຂຶ້ນ; ພ້ອມນັ້ນ, ທ່ານຍັງໄດ້ນຳເອົາເນື້ອໃນສຳຄັນຂອງກອງປະຊຸມໃນການຮັບຮອງເອົາການປັບປຸງຄະນະລັດຖະບານ, ແຜນພັດທະນາເສດຖະກິດ-ສັງຄົມ, ງົບປະມານແຫ່ງລັດ, ເງິນຕາ ເຜີຍແຜ່ໃຫ້ປະຊາຊົນຮັບຮູ້ ແລະ ເຂົ້າໃຈ ແລະ ຮຽກຮ້ອງໃຫ້ປະຊາຊົນ ຈົ່ງສືບຕໍ່ເສີມຂະຫຍາຍຄວາມສາມັກຄີຢູ່ຂ້າງພັກ-ລັດ, ສ້າງຄອບຄົວໃຫ້ມີຄວາມຮັ່ງມີ, ປະເທດຊາດຫລຸດພົ້ນອອກຈາກຄວາມທຸກຍາກ; ພາຍຫລັງທ່ານຮອງປະທານສະພາແຫ່ງຊາດ ມີຄວາມເຫັນແລ້ວ ກໍໄດ້ມີການຕອບຄຳຖາມ, ຂໍ້ສະເໜີຂອງປະຊາຊົນ ຜູ້ມີສິດເລືອກຕັ້ງຢ່າງກົງໄປກົງມາ.

ຈາກນັ້ນ, ຄະນະ ຍັງໄດ້ມອບເຄື່ອງອຸປະກອນການສຶກສາ ເຊິ່ງປະກອບມີ: ປຶ້ມ, ບິກ, ສໍ, ກະເປົາເປ້ ແລະ ອຸປະກອນກິລາ ຈຳນວນໜຶ່ງມອບໃຫ້ກັບໂຮງຮຽນປະຖົມສົມບູນນາກອງ ເຂດຕຳລວງ.

(ນາງ ຕາດຳ ທ່ານຝ້າ)

## ເຜີຍແຜ່...

(ສພຊ) ໃນລະຫວ່າງວັນທີ 1-9 ກັນຍາ 2022, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 7 ແຂວງໄຊຍະບູລີ ໄດ້ສຳເລັດການເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສະພາປະຊາຊົນແຂວງຊຸດທີ (ສພຂ) II ເຊິ່ງນຳໂດຍທ່ານ ພົທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ ທັງເປັນສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 7 ແຂວງໄຊຍະບູລີ ຮ່ວມກັບທ່ານ ເພັງນິລັນ ຄຳພັນເພັງ ຮອງເລຂາພັກແຂວງ ປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ມີສະມາຊິກສະພາປະຊາຊົນແຂວງ ໄດ້ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ຢູ່ 4 ເມືອງ ຄື: ເມືອງແກ່ນທ້າວ, ປາກລາຍ, ທົ່ງມີໄຊ ແລະ ໄຊຍະບູລີ ແລະ ໄດ້ເຄື່ອນໄຫວຢູ່ກອງພັນໃຫຍ່ 201, ກອງພົນທະຫານຮາກ 2 ແລະ ກອງບັນຊາການທະຫານແຂວງ.

ໃນການເຄື່ອນໄຫວໃນຄັ້ງນີ້, ບັນດາທ່ານ ສສຊ ໄດ້ຜັດປ່ຽນກັນເຜີຍແຜ່ຜົນຂອງກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງໄຊຍະບູລີ ຊຸດທີ II ໂດຍໄດ້ຍົກໃຫ້ເຫັນບາງເນື້ອໃນມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2022, ມະຕິ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2022, ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານກ່ຽວກັບການຈັດຕັ້ງປະຕິບັດແຜນການທ່ອງທ່ຽວສີຂຽວ ແລະ ການເປີດປະເທດ ຕິດພັນກັບການປ້ອງກັນ ແລະ ຮັບມືການແຜ່ລະບາດຂອງໂຄວິດ-19, ມະຕິ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດບັນດາຄາດໝາຍຂະແໜງສຶກສາທິການ ແລະ ກິລາ, ການປັບປຸງຄຸນນະພາບລະບົບການຮຽນ-ການສອນ ທຸກຊັ້ນ-ທຸກສາຍ ໃນໄລຍະໃໝ່ ແລະ ການຄຸ້ມຄອງວຽກງານກິລາ-ກາຍຍະກຳ, ມະຕິ ວ່າດ້ວຍການຮັບຮອງເອົາບົດລາຍງານຜົນການຕິດຕາມກວດກາຄວາມຄືບໜ້າການຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ ໃນໄລຍະຜ່ານມາ ແລະ ທິດທາງແຜນການຕິດຕາມກວດກາຮອດປີ 2023 ຂອງສະພາແຫ່ງຊາດ, ມະຕິ ວ່າດ້ວຍການຮັບຮອງເອົາການແຕ່ງຕັ້ງຮອງນາຍົກລັດຖະມົນຕີ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ມະຕິ ວ່າດ້ວຍການຮັບຮອງເອົາການຍົກຍ້າຍ ແລະ ແຕ່ງຕັ້ງສະມາຊິກລັດຖະບານ, ມະຕິ ວ່າດ້ວຍການເລືອກຕັ້ງປະທານອົງການກວດສອບແຫ່ງລັດ ແລະ ມະຕິ ວ່າດ້ວຍການຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍ ຈຳນວນ 9 ສະບັບ.

ໂອກາດດັ່ງກ່າວ, ທ່ານ ພົທ. ສຸວອນ ເລືອງບຸນມີ ຍັງໄດ້ມອບເຄື່ອງອຸປະກອນຈຳນວນໜຶ່ງໃຫ້ແກ່ກອງພັນໃຫຍ່ 201, ມອບເຄື່ອງບໍລິໂພກຈຳນວນໜຶ່ງໃຫ້ກອງພົນທະຫານຮາບທີ 2 ແລະ ໄດ້ນຳເອົາເຄື່ອງຊ່ວຍເຫລືອອີກຈຳນວນໜຶ່ງ ມອບໃຫ້ສະພາປະຊາຊົນແຂວງໄຊຍະບູລີ ເຊິ່ງປະກອບມີ: ເຂົ້າສານ 50 ເປົາ, ຄອມພິວເຕີຕັ້ງໂຕະ 1 ໜ່ວຍ, ເຄື່ອງກິລາ ແລະ ຊຸດໂຊລາເຊວ 10 ຊຸດ ລວມມູນຄ່າທັງໝົດ 160 ລ້ານກວ່າກີບ ເພື່ອນຳໄປມອບຕໍ່ໃຫ້ບັນດາເມືອງທີ່ຍັງມີຄວາມຫຍຸ້ງຍາກ.

(ນາງ ກຸກກິກ ບຸດດາໄຊ)



## ປະທານ ກສຕສ...

(ສພຊ) ໃນທ້າຍເດືອນສິງຫາຜ່ານມາ, ທ່ານ ຮສ. ປອ. ລິນຄຳ ດວງສະຫວັນ ກຳມະການສຳຮອງສູນກາງພັກ, ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (ກສຕສ) ສະພາແຫ່ງຊາດ ທັງເປັນສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 1 ນະຄອນຫລວງວຽງຈັນ (ນວ) ພ້ອມດ້ວຍຄະນະ ໄດ້ສືບຕໍ່ພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນນະຄອນຫລວງວຽງຈັນ ຊຸດທີ II ຢູ່ສະໂມສອນຫ້ອງວ່າການປົກຄອງເມືອງໄຊເສດຖາ ໂດຍມີເລຂາ, ຮອງເລຂາ, ບັນດາຄະນະປະຈຳພັກ ແລະກຳມະການຄະນະພັກເມືອງ ພ້ອມດ້ວຍພະນັກງານຂອງແຕ່ລະຫ້ອງການ 25 ຫ້ອງການຂອງເມືອງເຂົ້າຮ່ວມ.

ໂອກາດດັ່ງກ່າວ, ຄະນະຜູ້ແທນ ໄດ້ເຜີຍແຜ່ຜົນຂອງກອງປະຊຸມປະກອບມີ: ບັນດາມະຕິ, ກົດໝາຍ ແລະ ເນື້ອໃນບົດລາຍງານຕ່າງໆ ທີ່ນຳເຂົ້າພິຈາລະນາ ແລະ ຮັບຮອງເອົາຢູ່ໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດຊຸດທີ IX ແລະ ບັນດາເນື້ອໃນເອກະສານບົດລາຍງານຕ່າງໆ ທີ່ນຳເຂົ້າພິຈາລະນາ ແລະ ຮັບຮອງເອົາຢູ່ໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນນະຄອນຫລວງວຽງຈັນ ຊຸດທີ II; ຈາກນັ້ນ, ກອງປະຊຸມ ກໍໄດ້ມີການແລກປ່ຽນຄຳຄິດເຫັນ ແລະ ຮັບຟັງຄຳສະເໜີຈາກຜູ້ມີສິດເລືອກຕັ້ງ ແລະ ພາກສ່ວນກ່ຽວຂ້ອງ.

## ສະມາຄົມ...

ເກີຣາໂດ ເປນາລເວ ປໍຕາລ (Gerardo penalver portal) ຮອງລັດຖະມົນຕີກະຊວງການຕ່າງປະເທດ ຜູ້ທີ 1 ແຫ່ງ ສ.ກູບາ ໄດ້ຕາງໜ້າລັດຖະບານ ສ.ກູບາ ແລະ ສະຖາບັນກູບາເພື່ອມິດຕະພາບກັບນາໆຊາດ ເປັນຜູ້ມອບ, ສະຫາຍ ສຈ. ປອ. ຈະເລີນ ເຢຍປາວເຮີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ປະທານສະມາຄົມມິດຕະພາບ ລາວ-ກູບາ, ປະທານຄະນະມິດຕະພາບລັດຖະສະພາ ລາວ-ກູບາ, ຕາງໜ້າຄະນະບໍລິຫານສະມາຄົມມິດຕະພາບຕະພາບ ລາວ-ກູບາ ເປັນຜູ້ຮັບ ໂດຍໃຫ້ກຽດເຂົ້າຮ່ວມຂອງສະຫາຍ ທອງສະຫວັນ ພົມວິຫານ ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ, ສະຫາຍ ນາງ ເອັນນາ ເອເທີ ວຽງວາລເດສ ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສ.ກູບາ ປະຈຳ ສປປລາວ; ນອກນັ້ນ, ຍັງມີບັນດາສະຫາຍຜູ້ຕາງໜ້າຈາກກະຊວງສາທາລະນະສຸກ, ກະຊວງສຶກສາທິການ ແລະ ກິລາ, ກະຊວງການຕ່າງປະເທດ, ຕາງໜ້າບັນດາກຳມາທິການຂອງສະພາແຫ່ງຊາດ, ຕາງໜ້າອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ຄະນະບໍລິຫານງານສະມາຄົມມິດຕະພາບລາວ-ກູບາ ແລະ ພະນັກງານຈາກພາກສ່ວນທີ່ກ່ຽວຂ້ອງຂອງລາວ ແລະ ກູບາ ເຂົ້າຮ່ວມ.

ການທີ່ພັກ, ລັດຖະບານ ແລະ ປະຊາຊົນ ກູບາ ແລະ ສະຖາບັນກູບາເພື່ອມິດຕະພາບກັບນາໆຊາດ ມອບຫລຽນໄຊສາມັກຄີ ເຊິ່ງເປັນຫລຽນທີ່ສູງສົ່ງ ຂອງ ສ. ກູບາ ແລະ ຫລຽນກາລະນຶກ 60 ປີ, ເປັນຫລຽນທີ່ມີຄວາມໝາຍ ຂອງສະຖາບັນກູບາເພື່ອມິດຕະພາບກັບນາໆຊາດ ໃຫ້ແກ່ສະມາຄົມມິດຕະພາບລາວ-ກູບາ ໃນຄັ້ງນີ້ ແມ່ນສະແດງເຖິງການຕີລາຄາສູງຕໍ່ການສະໜັບສະໜູນ ແລະ ເຄື່ອນໄຫວປະກອບສ່ວນຂອງສະມາຄົມມິດຕະພາບລາວ-ກູບາ ໃນການຕໍ່ສູ້ອັນເປັນທຳຂອງປະຊາຊົນກູບາ ຢູ່ໃນເວທີພາກພື້ນ ແລະ ສາກົນ, ການຕໍ່ສູ້ຕ້ານການປິດລ້ອມທຸກຮູບແບບຂອງອິດທິກຳລັງປໍລະປັກທີ່ມີຕໍ່ກູບາ; ພ້ອມນັ້ນ, ກໍຍັງເຄື່ອນໄຫວປະກອບສ່ວນເຂົ້າໃນການປົກປັກຮັກສາ, ເສີມຂະຫຍາຍ ແລະ ເພີ່ມພູນຄູນສ້າງສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ການຮ່ວມມື ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ ແລະ ກູບາ ໃຫ້ນັບມື້ເກີດດອກອອກຜົນຍິ່ງຂຶ້ນ.

ໃນພິທີ, ສະຫາຍ ສຈ. ປອ. ຈະເລີນ ເຢຍປາວເຮີ ຕາງໜ້າໃຫ້ຄະນະບໍລິຫານສະມາຄົມມິດຕະພາບລາວ-ກູບາ ສະແດງຄວາມຂອບໃຈມາຍັງພັກ, ລັດຖະບານ ແລະ ປະຊາຊົນກູບາ ແລະ ສະຖາບັນກູບາເພື່ອມິດຕະພາບກັບນາໆຊາດ ທີ່ໄດ້ມອບຫລຽນໄຊສາມັກຄີ ແລະ ຫລຽນກາລະນຶກ 60 ປີ ອັນຊົງກຽດນີ້ ພ້ອມທັງຢືນຢັນວ່າຈະສືບຕໍ່ສະໜັບສະໜູນ ແລະ ຊ່ວຍເຫລືອສະຫາຍກູບາ ໃນການຕໍ່ສູ້ທວງເອົາຄວາມເປັນທຳ, ຄວາມຍຸຕິທຳຈາກອິດທິກຳລັງປໍລະປັກ ເພື່ອສິດທິໃນການສ້າງສາພັດທະນາປະເທດຊາດ ແລະ ພ້ອມກັບບັນດາສະຫາຍໃນສະຖາບັນກູບາເພື່ອມິດຕະພາບກັບນາໆຊາດ ແລະ ສະມາຄົມມິດຕະພາບກູບາ-ລາວ ໃນການເສີມຂະຫຍາຍ ແລະ ເພີ່ມພູນຄູນສ້າງສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ການຮ່ວມມື ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ ແລະ ກູບາ ໃຫ້ແຕກດອກອອກຜົນຍິ່ງໆຂຶ້ນ ເພື່ອນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງຊາດ ລາວ ແລະ ກູບາ.

## ຮອງປະທານ...

ສະຫະປະຊາຊາດ, ຜູ້ອຳນວຍການອົງການສະຫະປະຊາຊາດ ເພື່ອການພັດທະນາ (UNDP) ປະຈຳພາກພື້ນອາຊີ-ປາຊີຟິກ ພ້ອມດ້ວຍຄະນະ ທີ່ເດີນທາງມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປລາວ ໃນລະຫວ່າງວັນທີ 4-8 ກັນຍາ 2022.

ໃນໂອກາດດັ່ງກ່າວ, ທ່ານ ສົມມາດ ພົລເສນາ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ຕີລາຄາສູງຕໍ່ການຢ້ຽມຢາມ ສປປລາວ ຂອງທ່ານ ນາງ ຄານນີ ວິຍາຣາຈາ ເຊິ່ງເປັນໂອກາດອັນດີ ໃຫ້ທ່ານໄດ້ສຳຜັດ ແລະ ເຂົ້າໃຈແຈ້ງຕື່ມກ່ຽວກັບສະພາບການພັດທະນາເສດຖະກິດ-ສັງຄົມ ຂອງ ສປປລາວ. ທ່ານໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງ ຕໍ່ການປະກອບສ່ວນອັນສຳຄັນ ຂອງອົງການ UNDP ທີ່ໄດ້ໃຫ້ການສະໜັບສະໜູນແກ່ ສປປລາວ ມາໂດຍຕະຫລອດ ແລະ ໄດ້ແຈ້ງໃຫ້ຄະນະຜູ້ແທນຂອງ UNDP ຊາບກ່ຽວກັບສະພາບການໂດຍລວມຂອງ ສປປລາວ ໂດຍສະເພາະແມ່ນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຕິດພັນກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ. ພ້ອມນັ້ນ, ທ່ານຍັງໄດ້ຍົກໃຫ້ເຫັນເຖິງການຈັດຕັ້ງປະຕິບັດພາລະບົດບາດ ແລະ ສະພາບການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃນການຈັດຕັ້ງປະຕິບັດ 3 ພາລະບົດບາດຂອງສະພາແຫ່ງຊາດ ຄື: ດ້ານນິຕິບັນຍັດ, ການຕົກລົງບັນຫາສຳຄັນຂອງຊາດ ແລະ ການຕິດຕາມກວດກາ ກໍຄືການຈັດຕັ້ງຜັນຂະຫຍາຍຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງ ຊຸດທີ II ໃນ 18 ແຂວງທົ່ວປະເທດ.

ໃນໂອກາດດຽວກັນ, ທ່ານ ນາງ ຄານນີ ວິຍາຣາຈາ ກໍໄດ້ລາຍງານກ່ຽວກັບສະພາບການເຄື່ອນໄຫວວຽກງານຂອງ UNDP ຢູ່ ສປປລາວ ແລະ ໄດ້ສະແດງຄວາມຊົມເຊີຍຕໍ່ການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດລາວ ໂດຍສະເພາະແມ່ນການພັດທະນາ ແລະ ການສ້າງຕັ້ງສະພາປະຊາຊົນຂັ້ນແຂວງ ໃນ 18 ແຂວງ ທົ່ວປະເທດ. ການພົບປະໃນຄັ້ງນີ້ ໄດ້ດຳເນີນໄປດ້ວຍບັນຍາກາດທີ່ດີ ແລະ ມີຄວາມເຂົ້າໃຈເຊິ່ງກັນ ແລະກັນ; ພ້ອມນັ້ນ, ທ່ານຜູ້ອຳນວຍການອົງການ UNDP ປະຈຳພາກພື້ນອາຊີ-ປາຊີຟິກ ໄດ້ຢືນຢັນວ່າ: ອົງການ UNDP ຈະສືບຕໍ່ໃຫ້ການຮ່ວມມື ແລະ ສະໜັບສະໜູນບັນດາໂຄງການສ້າງຄວາມເຂັ້ມແຂງ ໃຫ້ແກ່ສະພາແຫ່ງຊາດ ກໍຄື ສປປລາວ ໃນຕໍ່ໜ້າ.

## ສຳເລັດ...

ຜົ້ງສາລີ ດຳເນີນໄປດ້ວຍດີ, ມີປະສິດທິພາບ ແລະ ໃຫ້ໄດ້ຮັບຜົນສຳເລັດຕາມແຜນການ; ໃນລະຫວ່າງວັນທີ 5-6 ກັນຍາ 2022 ທີ່ຫ້ອງປະຊຸມຂອງສະພາປະຊາຊົນແຂວງຜົ້ງສາລີ, ກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ໄດ້ສຳເລັດກອງປະຊຸມສຳມະນາກ່ຽວກັບຜົນການນຳເອົາປຶ້ມຄູ່ມື 2 ສະບັບດັ່ງກ່າວ ໂດຍການເປັນປະທານຂອງທ່ານ ສຸບັນ ສະວະບຸດ ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ; ມີທ່ານ ຄຳສິງ ໄຊສົມແພງ ຮອງປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ, ທ່ານ ສິງຄຳ ວົງພະຈັນ ຮອງເລຂາທິການສະພາແຫ່ງຊາດ, ບັນດາທ່ານຮອງປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ສະພາປະຊາຊົນຂັ້ນແຂວງ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງປະຈຳເຂດເລືອກຕັ້ງເມືອງ ຂອງແຂວງຊຽງຂວາງ ແລະ ຜົ້ງສາລີ ພ້ອມດ້ວຍພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ທັງນີ້ ເພື່ອນຳເອົາຜົນຂອງການນຳເອົາຮ່າງປຶ້ມຄູ່ມື 2 ສະບັບດັ່ງກ່າວ ໄປຈັດຕັ້ງປະຕິບັດທົດລອງ ຢູ່ 7 ເມືອງ ຂອງແຂວງຊຽງຂວາງ ແລະ 7 ເມືອງ ຂອງແຂວງຜົ້ງສາລີ ມາແລກປ່ຽນບົດຮຽນຮ່ວມກັນ ແລະ ເພື່ອເປັນການສັງລວມເນື້ອໃນຜົນຂອງການນຳເອົາຮ່າງປຶ້ມຄູ່ມື 2 ສະບັບຂອງສະພາແຫ່ງຊາດ ທີ່ນຳໄປຈັດຕັ້ງປະຕິບັດທົດລອງຂອງສະມາຊິກສະພາປະຊາຊົນແຂວງດັ່ງກ່າວ ມາປັບປຸງຮ່າງປຶ້ມຄູ່ມື 2 ສະບັບ ໃຫ້ມີເນື້ອໃນຮັດກຸມ, ລະອຽດ, ຈະແຈ້ງ ແລະ ສາມາດນຳໄປຈັດຕັ້ງປະຕິບັດ ໃຫ້ມີປະສິດທິຜົນ.

ກອງປະຊຸມ, ໄດ້ຮັບຟັງການສະເໜີກ່ຽວກັບຜົນສຳເລັດການນຳເອົາຮ່າງປຶ້ມຄູ່ມື 2 ສະບັບ ໄປຈັດຕັ້ງປະຕິບັດທົດລອງ ຢູ່ບັນດາເມືອງຕ່າງໆຂອງແຂວງຊຽງຂວາງ ແລະ ຜົ້ງສາລີ; ຮັບຟັງການລາຍງານທົບທວນຄືນໂດຍຫຍໍ້ຕໍ່ຮ່າງປຶ້ມຄູ່ມືວຽກງານສາຍດ່ວນ; ບົດສະເໜີຕີລາຄາການຈັດຕັ້ງປະຕິບັດທົດລອງຮ່າງຄູ່ມືວ່າດ້ວຍການພົບປະປະຊາຊົນ ຂອງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຢູ່ 2 ແຂວງ; ຈາກນັ້ນ, ຕາງໜ້າຄະນະສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງໃນແຕ່ລະເມືອງ ໄດ້ປະກອບຄຳຄິດຄຳເຫັນຢ່າງມີຈຸດສຸມ ແລະ ກົງໄປກົງມາ.

ໃນຕອນທ້າຍ, ທ່ານ ສຸບັນ ສະວະບຸດ ໄດ້ມີຄຳເຫັນກ່າວປິດກອງປະຊຸມວ່າ: ກອງປະຊຸມສຳມະນາຄັ້ງນີ້ ເປັນກອງປະຊຸມທີ່ມີຄວາມສຳຄັນຫລາຍ ເຊິ່ງເປັນສ່ວນໜຶ່ງທີ່ຈະຊ່ວຍເພີ່ມທະວີຍົກສູງພາລະບົດບາດຂອງສະພາພວກເຮົາ ໃນສັງຄົມໃຫ້ຫລາຍຂຶ້ນ ໃນຂົງເຂດວຽກງານການລົງພົບປະປະຊາຊົນ ຂອງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ການພິຈາລະນາ ແກ້ໄຂສາຍດ່ວນ ເວົ້າລວມ, ເວົ້າສະເພາະຈະຊ່ວຍເຮັດໃຫ້ການເຄື່ອນໄຫວວຽກງານການລົງພົບປະປະຊາຊົນ ແລະ ການພິຈາລະນາແກ້ໄຂສາຍດ່ວນຂອງສະພາໃນຕໍ່ໜ້າ ໃຫ້ມີຄວາມສະດວກ, ເປັນລະບົບ, ມີປະສິດພາບ ແລະ ປະສິດທິຜົນ ເຊິ່ງຕະຫລອດໄລຍະຂອງການດຳເນີນກອງປະຊຸມບັນດາທ່ານຜູ້ແທນກອງປະຊຸມ ໄດ້ເປັນເຈົ້າການຢ່າງຕັ້ງໜ້າ, ສຸມສະຕິປັນຍາຄົ້ນຄວ້າ ແລະ ປະກອບຄຳຄິດຄຳເຫັນຕາມຄຳເຈາະຈີ້ມ ແລະ ປະສົບການຍົກໃຫ້ເຫັນເຖິງຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ບົດຮຽນທີ່ຖອດຖອນໄດ້ຈາກການທົດລອງນຳໃຊ້ຕົວຈິງ ປຶ້ມຄູ່ມື 2 ສະບັບ ຢູ່ທ້ອງຖິ່ນຂອງຕົນ ແລະ ຂໍ້ສະເໜີຈຳນວນໜຶ່ງ ເຊິ່ງບັນດາຄຳຄິດຄຳເຫັນຂອງຜູ້ແທນກອງປະຊຸມ ລ້ວນແຕ່ເປັນຄຳເຫັນທີ່ມີປະໂຫຍດຫລາຍໃຫ້ແກ່ຄະນະຮັບຜິດຊອບ ເພື່ອນຳໄປປັບປຸງເນື້ອໃນຂອງຮ່າງປຶ້ມຄູ່ມື 2 ສະບັບດັ່ງກ່າວ ໃຫ້ມີເນື້ອໃນຄົບຖ້ວນສົມບູນແບບ, ສອດຄ່ອງກັບກົດໝາຍ, ນິຕິກຳ ແລະ ສະພາບຕົວຈິງ ຂອງທ້ອງຖິ່ນ ໃຫ້ສາມາດເປັນເຄື່ອງມື ແລະ ບ່ອນອີງໃນການຈັດຕັ້ງປະຕິບັດວຽກງານການລົງພົບປະປະຊາຊົນ ແລະ ການພິຈາລະນາ ແກ້ໄຂສາຍດ່ວນໃຫ້ແກ່ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ການຈັດຕັ້ງ ໂດຍສະເພາະແມ່ນສະມາຊິກສະພາຜູ້ໃໝ່ ແລະ ພະນັກງານຜູ້ທີ່ຮັບຜິດຊອບຊ່ວຍວຽກໃນ 2 ວຽກງານດັ່ງກ່າວ.

ກອງປະຊຸມຄັ້ງນີ້, ໄດ້ຮັບການສະໜັບສະໜູນຈາກອົງການເຮວວີຕັດສ (Hevetaslaos) ແລະ ງົບປະມານສົມທົບຈາກຄະນະເລຂາທິການສະພາແຫ່ງຊາດ.

(ນາງ ສຸພາວັນ ຫອມສະນິດ)



# ຮອງປະທານ ກວທສ ເຂົ້າຮ່ວມພິທີເປີດການແຂ່ງຂັນປິ່ງປ່ອງ ຊິງແຊັມເຍົາວະຊົນອາຊີ ຄັ້ງທີ 26




(ສພຊ) ວັນທີ 1 ກັນຍາຜ່ານມາ, ທ່ານ ນາງ ມະນີວັນ ເຢຍປາວເຮີ ຮອງປະທານກຳມາທິການວັດທະນະທຳ-ສັງຄົມ (ກວທສ) ສະພາແຫ່ງຊາດ ໄດ້ເຂົ້າຮ່ວມພິທີເປີດການແຂ່ງຂັນກິລາປິ່ງປ່ອງ ຊິງແຊັມເຍົາວະຊົນອາຊີ ຄັ້ງທີ 26 ທີ່ໄອເຕັກມໍ ນະຄອນຫລວງວຽງຈັນ ໂດຍມີທ່ານ ນາງ ແສງເດືອນ ຫລ້າຈັນທະບູນ ປະທານສະຫະພັນກິລາປິ່ງປ່ອງແຫ່ງຊາດລາວ ພ້ອມດ້ວຍບັນດາຄະນະສະຫະພັນປິ່ງປ່ອງອາຊີ, ຄະນະນຳ, ຄູຝຶກ ແລະ ນັກກິລາເຂົ້າຮ່ວມ.

ການແຂ່ງຂັນກິລາປິ່ງປ່ອງ ຊິງແຊັມເຍົາວະຊົນ-ໄວ ໜຸ່ມອາຊີ ຄັ້ງທີ 26 ທີ່ ສປປລາວ ເປັນເຈົ້າພາບ ເຊິ່ງເປັນຄັ້ງປະຫວັດສາດ ຈະດຳເນີນການແຂ່ງຂັນ ລະຫວ່າງວັນທີ 1-6 ກັນຍາ 2022 ທີ່ສູນການຄ້າໄອເຕັກ ມໍ ຊັ້ນ 7 ນະຄອນຫລວງວຽງຈັນ ເຂົ້າຊົມໂດຍບໍ່ເສຍຄ່າ ໂດຍມີນັກກິລາຈາກ 17 ປະເທດ ແລະ ເຂດແຄວ້ນ 160 ກວ່າຄົນ ເຂົ້າຮ່ວມຊິງໄຊ ໃນ 11 ລາຍການ; ໃນນີ້, ສປປລາວ ເຈົ້າພາບ ໄດ້ສົ່ງນັກກິລາເຂົ້າຮ່ວມຈຳນວນ 16 ຄົນ ໃນ 10 ຈາກ 11 ລາຍການທີ່ບັນຈຸແຂ່ງຂັນ.

ສຳລັບການແຂ່ງມີທັງໝົດ 11 ລາຍການຄື: ລະດັບເຍົາວະຊົນ ຮຸ່ນອາຍຸບໍ່ເກີນ 15 ປີ 4 ລາຍການ ປະເພດດ່ຽວຍິງ-ຊາຍ, ທີມຍິງ-ຊາຍ; ລະດັບໄວໜຸ່ມ ຮຸ່ນອາຍຸບໍ່ເກີນ 19 ປີ ມີ 7 ລາຍການ ປະເພດດ່ຽວຍິງ-ຊາຍ ຄູ່ຍິງ-ຊາຍ ຄູ່ປະສົມ ແລະ ທີມຍິງ-ຊາຍ ໃນນີ້ ສຳລັບນັກກິລາ 17 ປະເທດ ແລະ ເຂດແຄວ້ນ ທີ່ເຂົ້າຮ່ວມຄັ້ງນີ້ ປະກອບມີ: ບາເຣນ, ບັງກລາເທດ, ສປຈີນ, ໄຕ້ຫວັນ, ຮົງກົງ, ອີຣານ, ອິນເດຍ, ຍີ່ປຸ່ນ, ກາຊັກສະຖານ, ມາເລເຊຍ, ເນປານ, ກາຕາ, ສ.ເກົາຫລີ, ສິງກະໂປ, ໄທ, ອູຊະເບກິສະຖານ ແລະ ສປປລາວ.

ບັນດານັກກິລາທີ່ໄດ້ແຊັມ ແລະ ຮອງແຊັມ ປະເພດດ່ຽວຍິງ-ຊາຍ 15 ປີ ແລະ 19 ປີ ລວມທັງແຊັມປະເພດທີມຍິງ ທີມຊາຍ 15 ປີ ແລະ 19 ປີ ຈະໄດ້ສິດເຂົ້າຮ່ວມແຂ່ງຂັນປິ່ງປ່ອງເຍົາວະຊົນ-ໄວໜຸ່ມ ຊິງແຊັມໂລກ (World Youth 2022). ສະນັ້ນ, ຂໍເຊີນຊວນບັນດາທ່ານພໍ່ແມ່ປະຊາຊົນຊາວລາວ ກໍຄືຊາວນະຄອນຫລວງວຽງຈັນ ແຂກຕ່າງດ້າວທ້າວຕ່າງແດນ ມາຮ່ວມຊົມ-ຮ່ວມເຊຍ ແລະ ເປັນເຈົ້າພາບທີ່ດີຮ່ວມກັນ ເພື່ອເຮັດໃຫ້ງານຄັ້ງນີ້ ປະສົບຜົນສຳເລັດຕາມຄາດໝາຍຢ່າງຈົບງາມ.

(ອານຸສອນ ພູມມີທອນ)



# ສພຂ ຫລວງນ້ຳທາ ສະຫລຸບຕີລາຄາຖອດຖອນບົດຮຽນ ການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3



(ສພຊ) ຕອນເຊົ້າວັນທີ 26 ສິງຫາ 2022 ສະພາປະຊາຊົນແຂວງ (ສພຂ) ຫລວງນ້ຳທາ ໄດ້ເປີດກອງປະຊຸມສະຫລຸບຕີລາຄາຖອດຖອນບົດຮຽນກ່ຽວກັບການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຊຸດທີ II ທີ່ຫ້ອງປະຊຸມ ສພຂ ພາຍໃຕ້ການເປັນປະທານຂອງທ່ານ ຄຳຟອງ ອິນມານີ ປະທານ ສພຂ ໂດຍການເຂົ້າຮ່ວມຂອງທ່ານ ອ່ອນຈັນ ທຳມະວົງ ຮອງເຈົ້າແຂວງ ແຂວງຫລວງນ້ຳທາ ຜູ້ຊີ້ນຳຂົງເຂດເສດຖະກິດຂອງແຂວງ, ມີສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ (ສສຂ), ຫົວໜ້າ-ຮອງຫົວໜ້າພະແນກການຂອງແຂວງ, ຫົວໜ້າ-ຮອງຫົວໜ້າຂະແໜງ ພ້ອມດ້ວຍພະນັກງານວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ 30 ກວ່າທ່ານ.

ກອງປະຊຸມໄດ້ຮັບຟັງບົດລາຍງານການສະຫລຸບຕີລາຄາກ່ຽວກັບການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຊຸດທີ II ເຊິ່ງກອງປະຊຸມໄດ້ດຳເນີນເປັນເວລາ 3 ວັນ ໃນຕົ້ນເດືອນສິງຫາ 2022 ດ້ວຍຜົນສຳເລັດອັນຈົບງາມ ແລະ ກອງປະຊຸມ ສສຊ ປະຈຳເຂດເລືອກຕັ້ງ, ສສຂ ແລະ ແຂກຖືກເຊີນ ໄດ້ສຸມໃສ່ປະກອບຄຳເຫັນຕໍ່ເນື້ອໃນທີ່ນຳເຂົ້າໃນກອງປະຊຸມຢ່າງມີຈຸດສຸມ ເພື່ອເຮັດໃຫ້ເນື້ອໃນຄົບຖ້ວນສົມບູນ, ເຮັດໃຫ້ການລົງຄະແນນສຽງຮັບຮອງເອົາມະຕິກອງປະຊຸມ ໄດ້ຮັບຄະແນນສຽງເຫັນດີເປັນສ່ວນຫລາຍ ໂດຍສະເລ່ຍໃນລະດັບ 96%-100% ເຊິ່ງກອງປະຊຸມດັ່ງກ່າວໄດ້ຮັບຮອງລົງຄະແນນສຽງເອົາມະຕິຕ່າງໆ ຈຳນວນ 7 ສະບັບ ແລະ ເນື້ອໃນກອງປະຊຸມສະໄໝສາມັນຄັ້ງນີ້ ເປັນການຜັນຂະຫຍາຍເນື້ອໃນມະຕິກອງປະຊຸມໃຫຍ່ຄັ້ງທີ VIII ຂອງອົງຄະນະພັກແຂວງ, 2 ວາລະແຫ່ງຊາດ, ການຈັດຕັ້ງປະຕິບັດພາລະບົດບາດຂອງ ສພຂ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ ໃນການພິຈາລະນາຮັບຮອງເອົາການສ້າງແລະປັບປຸງນິຕິກຳໃຕ້ກົດໝາຍ, ບັນຫາສຳຄັນພື້ນຖານຂອງແຂວງ, ປະກອບສ່ວນເຮັດໃຫ້ແຂວງມີສະຖຽນລະພາບທາງດ້ານສັງຄົມໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ເສດຖະກິດສືບຕໍ່ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ; ພ້ອມດຽວກັນ, ຜູ້ແທນກອງປະຊຸມໄດ້ແລກປ່ຽນປະກອບຄຳຄິດເຫັນກ່ຽວກັບການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ທີ່ສຳເລັດໄປແລ້ວນັ້ນຢ່າງມີຈຸດສຸມ ເພື່ອເປັນການຖອດຖອນບົດຮຽນ ເຮັດໃຫ້ການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນຂອງ ສພຂ ຄັ້ງຕໍ່ໄປໃຫ້ມີເນື້ອໃນຖືກຕ້ອງຄົບຖ້ວນ, ວ່ອງໄວທ່ວງທັນກັບເວລາ.

ໃນໂອກາດນີ້, ຍັງໄດ້ຮັບຟັງຄຳເຫັນຂອງທ່ານ ຄຳຟອງ ອິນມານີ ເຊິ່ງທ່ານໄດ້ເອກະພາບ ແລະ ຊົມເຊີຍຕໍ່ກັບຄຳຄິດເຫັນໃນກອງປະຊຸມຄັ້ງນີ້ ແລະ ບັນດາຄຳເຫັນ, ຂໍ້ຄົງຄ້າງແມ່ນຈະນຳປຶກສາຫາລື, ແກ້ໄຂໃນຕໍ່ໜ້າໃຫ້ດີຂຶ້ນກ່ອນເກົ່າ ທັງຮຽກຮ້ອງໃຫ້ອະນຸກຳມະການກະກຽມເນື້ອໃນຕ່າງໆ ນຳເອົາເນື້ອໃນຈິດໃຈກອງປະຊຸມນີ້ໄປປັບປຸງ, ແກ້ໄຂ ໃນຂໍ້ຕົກບົກພ່ອງຂອງຕົນ ເພື່ອເຮັດໃຫ້ກອງປະຊຸມສະໄໝສາມັນຂອງ ສພຂ ຄັ້ງຕໍ່ໄປ ໃຫ້ທ່ວງທັນເວລາ, ຖືກຕ້ອງສອດຄ່ອງກັບກົດໝາຍ ແລະ ຮັບປະກັນຄຸນນະພາບໃຫ້ດີຂຶ້ນກວ່າເກົ່າ.

# ສສຂ ຫົວພັນ ຮ່ວມກັບພາກສ່ວນກ່ຽວຂ້ອງ ຫາລືການຄຸ້ມຄອງຮ້ານອາຫານ-ບັນເທີງ



(ສພຊ) ວັນທີ 31 ສິງຫາ 2022 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ຫົວພັນ ໄດ້ຈັດກອງຊຸມຄົ້ນຄວ້າການຈັດຕັ້ງປະຕິບັດການຄຸ້ມຄອງຮ້ານອາຫານ ແລະ ຮ້ານບັນເທີງ ຢູ່ທຸກເມືອງທົ່ວແຂວງຫົວພັນເວົ້າລວມ ເວົ້າສະເພາະຢູ່ເທສະບານ ເມືອງຊຳເໜືອ ທີ່ເປີດບໍລິການຮ້ານອາຫານ ແລະ ຮ້ານບັນເທີງ ໃຫ້ຖືກຕ້ອງ ສອດຄ່ອງກັບລະບຽບກົດໝາຍກຳນົດ ໂດຍການເປັນປະທານຮ່ວມຂອງທ່ານ ຄອນປະພັນ ເລືອງສີຈັນທອງ ຮອງປະທານ ສພຂ ແລະ ທ່ານ ພຸດພັນ ແກ້ວວົງໄຊ ຮອງເຈົ້າແຂວງແຂວງຫົວພັນ ຜູ້ຊີ້ນຳວຽກງານວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ; ມີບັນດາທ່ານຄະນະປະຈຳ ສພຂ, ຫົວໜ້າ-ຮອງຫົວໜ້າພະແນກຖະແຫລງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ, ພະແນກສາທາລະນະສຸກ, ກອງບັນຊາການປ້ອງກັນຄວາມສະຫງົບ ແລະ ພະແນກອຸດສາຫະກຳ ແລະ ການຄ້າແຂວງ ຕະຫລອດຮອດຫົວໜ້າຂະແໜງ, ວິຊາການ ຂະແໜງວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ສພຂ ເຂົ້າຮ່ວມ.

ໃນກອງປະຊຸມ, ຜູ້ເຂົ້າຮ່ວມໄດ້ຮັບຟັງການລາຍງານໂດຍຫຍໍ້ ກ່ຽວກັບສະພາບການຈັດຕັ້ງປະຕິບັດໃນໄລຍະຜ່ານມາ ຕໍ່ກັບບັນຫາທາງສຽງຂອງສັງຄົມ ໃນການຄຸ້ມຄອງຮ້ານອາຫານ ແລະ ຮ້ານບັນເທີງຈຳນວນໜຶ່ງ ຈາກພາກສ່ວນກ່ຽວຂ້ອງ ໂດຍຍົກໃຫ້ເຫັນດ້ານດີ, ດ້ານອ່ອນ, ຂໍ້ຫຍຸ້ງຍາກ ແລະ ຂໍ້ສະເໜີຈຳນວນໜຶ່ງ ຈາກປະຊາຊົນ ໂດຍສະເພາະແມ່ນການເຄື່ອນໄຫວທີ່ບໍ່ຖືກຕ້ອງຕາມລະບຽບການ ເຊັ່ນ ການເປີດຮ້ານເກີນໂມງເວລາທີ່ພາກສ່ວນກ່ຽວຂ້ອງກຳນົດໄວ້, ເດັກນ້ອຍນັກຮຽນບໍ່ທັນຮອດອາຍຸກະສຽນ 18 ປີ ເຂົ້າຮ້ານບັນເທີງ, ບັນຫາມົ້ວສຸມຢາເສບຕິດ, ຂີ້ລັກງັດແງະ ແລະ ບັນຫາອື່ນໆ ເຮັດໃຫ້ມີຜົນກະທົບຕໍ່ສະພາບແວດລ້ອມສັງຄົມໃນປັດຈຸບັນ, ຈາກນັ້ນ ຍັງໄດ້ຮັບຟັງຄຳຄິດເຫັນ, ຊີ້ແຈງ ອະທິບາຍໃນການດຳເນີນທຸລະກິດ ຈາກພາກສ່ວນທີ່ຮັບຜິດຊອບ ພ້ອມທັງ ຜັດປ່ຽນກັນປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາ ເພື່ອຄົ້ນຄວ້າວິທີການແກ້ໄຂໃຫ້ສອດຄ່ອງ ແລະ ເໝາະສົມ.

ຕອນທ້າຍ, ປະທານກອງປະຊຸມ ຍັງໄດ້ເນັ້ນໜັກໃຫ້ພາກສ່ວນກ່ຽວຂ້ອງ ກວດກາເບິ່ງຄືນບັນດານິຕິກຳຕ່າງໆ ທີ່ກ່ຽວຂ້ອງກັບພະແນກຂອງຕົນທີ່ໄດ້ແຈ້ງອອກໄປແລ້ວນັ້ນ ນຳໄປເຜີຍແຜ່ໃຫ້ບັນດາຮ້ານ, ປະຊາຊົນໄດ້ຮັບຮູ້, ເຂົ້າໃຈຢ່າງເລິກເຊິ່ງ ຖືກຕ້ອງຕາມນິຕິກຳກຳນົດໄວ້, ພ້ອມນັ້ນຕ້ອງເອົາໃຈໃສ່ຕິດຕາມກວດກາ ຫ້າງຮ້ານຕ່າງໆ ຢ່າງເປັນປົກກະຕິ ແລະ ສຸມໃສ່ການປະຕິບັດມາດຕະການຜ່ອນຜັນ ທີ່ຂັ້ນເທິງວາງອອກຢ່າງເຂັ້ມງວດ ໂດຍອີງໃສ່ລະບຽບການ, ນິຕິກຳ, ກົດໝາຍ ໃນການດຳເນີນທຸລະກິດ ແລະ ການບໍລິການຮ້ານບັນເທີງໃຫ້ຖືກຕ້ອງຕາມຂໍ້ກຳນົດ ແລະ ລະບຽບກົດໝາຍກຳນົດໄວ້.

(ນາງ ປຸ້ຍນິຕາ)

# ຄະນະປະຈຳ ສພຂ ຈຳປາສັກ ຄົ້ນຄວ້າຫລາຍບັນຫາສຳຄັນ



(ສພຊ) ໃນວັນທີ 29 ສິງຫາ 2022 ຄະນະປະຈຳສະພາປະຊາຊົນແຂວງ (ສພຂ) ຈຳປາສັກ ໄດ້ເປີດກອງປະຊຸມປະຈຳເດືອນສິງຫາ 2022 ທີ່ຫ້ອງປະຊຸມຂອງຕົນ ໂດຍການເປັນປະທານຂອງທ່ານ ສົມສີ ມະນີນິນ ຮອງປະທານຄະນະປະຈຳສະພາປະຊາຊົນແຂວງ (ສພຂ) ຈຳປາສັກ, ມີບັນດາທ່ານໃນຄະນະປະຈຳ ສພຂ, ຄະນະເລຂາທິການ ແລະ ພະນັກງານວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.

ວາລະດຳເນີນກອງປະຊຸມ, ບັນດາທ່ານປະທານຄະນະກຳມະການ ແລະ ເລຂາທິການ ສພຂ ຈຳປາສັກ ໄດ້ຜັດປ່ຽນກັນຂຶ້ນຜ່ານລາຍງານເອກະສານຈຳນວນໜຶ່ງຄື: ຜ່ານຮ່າງບົດສະຫລຸບການເຄື່ອນໄຫວວຽກງານຂອງຄະນະປະຈຳ ສພຂ ປະຈຳເດືອນສິງຫາ 2022 ແລະ ທິດທາງແຜນການ ປະຈຳເດືອນກັນຍາ 2022; ຜ່ານບົດສະຫລຸບຖອດຖອນບົດຮຽນກ່ຽວກັບຜົນສຳເລັດການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຈຳປາສັກ ຊຸດທີ II; ຮັບຟັງການລາຍງານການຄວາມພ້ອມການສ້າງບົດບັນທຶກຮ່ວມມື ລະຫວ່າງຄະນະກຳມະການຂອງ ສພຂ ຈຳປາສັກ ກັບພາກສ່ວນກ່ຽວຂ້ອງ; ຮັບຟັງການຜ່ານຮ່າງມະຕິຂອງຄະນະປະຈຳ ສພຂ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງຄະນະສະມາຊິກສະພາປະຊາຊົນແຂວງ (ສສຂ) ຂັ້ນເມືອງ ແລະ ນະຄອນ ພ້ອມທັງຄົ້ນຄວ້າພິຈາລະນານິຕິກຳໃຕ້ກົດໝາຍ ຈຳນວນໜຶ່ງ ທີ່ອົງການປົກຄອງແຂວງຈຳປາສັກສະເໜີເຂົ້າມາໃນເດືອນສິງຫາ 2022.

ນອກນີ້, ກອງປະຊຸມຍັງໄດ້ຜ່ານແຜນການເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ເພື່ອເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ແລະ ສພຂ; ຮັບຟັງການລາຍງານຄວາມພ້ອມການກະກຽມຈັດເຝິກອົບຮົມສ້າງຄວາມເຂັ້ມແຂງໃຫ້ ສສຂ, ພະນັກງານ-ລັດຖະກອນຂອງ ສພຂ ແລະ ພະນັກງານຊ່ວຍວຽກຄະນະ ສສຂ ປະຈຳເຂດເລືອກຕັ້ງ 9 ເມືອງ, 1 ນະຄອນ ເຊິ່ງບັນດາທ່ານຜູ້ແທນກອງປະຊຸມໄດ້ປະກອບຄຳຄິດເຫັນຕໍ່ບັນດາເນື້ອໃນທີ່ນຳມາຄົ້ນຄວ້າພິຈາລະນາໃນກອງປະຊຸມ ຢ່າງກົງໄປກົງມາ ບົນພື້ນຖານຄວາມເອກະພາບ ແລະ ຖືກຕ້ອງສອດຄ່ອງກັບລະບຽບກົດໝາຍ.

ຕອນທ້າຍກອງປະຊຸມ, ທ່ານ ສົມສີ ມະນີນິນ ໄດ້ມີຄຳເຫັນສະຫລຸບຕີລາຄາຄືນ ແລະ ເນັ້ນໃຫ້ຄະນະກຳມະການ ແລະ ຄະນະເລຂາທິການ ສພຂ ຈົ່ງພ້ອມກັນສືບຕໍ່ເພີ່ມທະວີຄວາມສາມາດ ໃນການຈັດຕັ້ງປະຕິບັດວຽກງານຕາມການມອບໝາຍໃຫ້ມີຜົນສຳເລັດ ໂດຍສະເພາະການຈັດຕັ້ງປະຕິບັດທິດທາງແຜນການເຄື່ອນໄຫວຂອງເດືອນຕໍ່ໄປ ກໍຄືແຜນການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານ 6 ເດືອນທ້າຍປີ 2022 ຂອງ ສພຂ ຈຳປາສັກ ແລະ ການຕິດຕາມກວດກາການຈັດຕັ້ງປະຕິບັດບັນດາມະຕິຕ່າງໆ ທີ່ໄດ້ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຈຳປາສັກ II ໃຫ້ມີຜົນສຳເລັດສູງຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້.

(ສົມວິຈິດ ໄຊມົນຕີ)

# ສສຊ, ສສຂ ສາລະວັນ ເຜີຍແຜ່ມະຕິກອງປະຊຸມສະໄໝສາມັນ ຢູ່ຂັ້ນເມືອງ



(ສພຊ) ໃນວັນທີ 24 ສິງຫານີ້, ທ່ານ ສີເຮັ່ງ ຫອມສົມບັດ ປະທານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 14 ທັງເປັນປະທານສະພາປະຊາຊົນແຂວງ (ສພຂ) ສາລະວັນ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ສາລະວັນ ຊຸດທີ II ຢູ່ທີ່ສະໂມສອນເມືອງສະໜ້ອຍ ແລະ ບ້ານລະຮາງ ໂດຍມີອຳນາດການປົກຄອງເມືອງ, ຄະນະບ້ານ ແລະ ພໍ່ແມ່ປະຊາຊົນ ທັງພາຍໃນບ້ານອ້ອມຂ້າງເມືອງເຂົ້າຮ່ວມ 150 ກວ່າຄົນ.

ໂອກາດດັ່ງກ່າວ, ຄະນະຜູ້ແທນໄດ້ຜັດປ່ຽນເຜີຍແຜ່ຜົນຂອງກອງປະຊຸມ ປະກອບມີບັນດາມະຕິ, ກົດໝາຍ ແລະ ເນື້ອໃນບົດລາຍງານຕ່າງໆ ທີ່ນຳເຂົ້າພິຈາລະນາ ແລະ ຮັບຮອງເອົາຢູ່ໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຊ ຊຸດທີ IX ແລະ ບັນດາເນື້ອໃນເອກະສານບົດລາຍງານຕ່າງໆ ທີ່ນຳເຂົ້າພິຈາລະນາ ແລະ ຮັບຮອງເອົາຢູ່ໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ສາລະວັນ ຊຸດທີ II; ຈາກນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມ ກໍໄດ້ມີການແລກປ່ຽນຄຳຄິດເຫັນ ແລະ ຮັບຄຳສະເໜີຈາກຜູ້ມີສິດເລືອກຕັ້ງ ໂດຍສະເພາະບັນຫາພື້ນຖານໂຄງລາງ, ບັນຫາຄ່າຄອງຊີບ ແລະ ການສຶກສາ ເພື່ອນຳໄປສະເໜີໃຫ້ພາກສ່ວນກ່ຽວຂ້ອງແກ້ໄຂ.

ຕອນທ້າຍ, ທ່ານ ສີເຮັ່ງ ຫອມສົມບັດ ຍັງໄດ້ມອບກ້ອງກອງປະຊຸມທາງໄກ ຍີ່ຫໍ້ Logitech group ຈຳນວນ 1 ເຄື່ອງ ມູນຄ່າ 20 ລ້ານກີບ ມອບໃຫ້ຄະນະສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເມືອງສະໜ້ອຍ ເພື່ອຄຸ້ມຄອງ ແລະ ນຳໃຊ້ເຂົ້າໃນວຽກງານກອງປະຊຸມຮູບແບບວິດີໂອ ເຊິ່ງຮັບໂດຍທ່ານ ບຸນນານ ປັນຍາຈັກ ຫົວໜ້າຄະນະ ສສຂ ປະຈຳເມືອງສະໜ້ອຍ, ມີຕາງໜ້າອົງການປົກຄອງເມືອງ ພ້ອມດ້ວຍ ສສຊ, ສສຂ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພິຍານ.

(ດີລຳພົນ ພົມມະຈັນ)

# ຄະນະ ສສຊ ເຂດ 14 ເອົາໃຈໃສ່ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ 9 ພັນກວ່າເທື່ອຄົນ

ທ່ານ ສີເຮັງ ທອມສົມບັດ ປະທານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 14 ແຂວງສາລະວັນ ໄດ້ຕາງໜ້າໃຫ້ ສສຊ ປະຈຳເຂດເລືອກຕັ້ງທີ 14 ກໍຄື ສພຂ ສາລະວັນ ໄດ້ໃຫ້ສຳພາດຕໍ່ສື່ມວນຊົນ ໃນໂອກາດເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ເຊິ່ງທ່ານໄດ້ໃຫ້ຮູ້ວ່າ: ໂດຍປະຕິບັດຕາມພາລະບົດບາດ ສິດ ແລະ ໜ້າທີ່ ທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ, ນັບແຕ່ກອງປະຊຸມຄັ້ງປະຖົມມະລືກມາຮອດປັດຈຸບັນຄະນະ ສສຊ ເຂດ14 ກໍຄື ສພຂ ໄດ້ເຄື່ອນໄຫວຕາມພາລະບົດບາດຂອງຕົນມີຜົນສຳເລັດອັນພົ້ນເດັ່ນໃນຫລາຍດ້ານ ເປັນຕົ້ນແມ່ນ **ດ້ານການສ້າງ ແລະ ປັບປຸງກົດໝາຍ-ນິຕິກຳ:** ໄດ້ຈັດຕັ້ງການທາບທາມຮ່າງກົດໝາຍ ທັງໝົດ 8 ຄັ້ງ, ຈຳນວນ 25 ສະບັບ ແລະ ເຂົ້າຮ່ວມທາບທາມຮ່າງກົດໝາຍ ທັງພາຍໃນ ແລະ ຕ່າງແຂວງ ຕາມການເຊີນ 8 ຄັ້ງ ຈຳນວນ 9 ສະບັບ; ໄດ້ຮັບຮອງແຜນການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ 5 ປີ (2021-2025) ທັງໝົດ 15 ສະບັບ ໃນນັ້ນ, ສ້າງໃໝ່ 12 ສະບັບ, ປັບປຸງ 3 ສະບັບ, ໃນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຂ ຊຸດທີ II ຮັບຮອງແລ້ວ 3 ສະບັບ, ໃນນັ້ນ 2 ສະບັບ ແມ່ນແນໃສ່ປະຕິບັດ 2 ວາລະແຫ່ງຊາດ ຄື: ຄຸ້ມຄອງການລົງທຶນຂອງລັດໃນກິດຈະການເຊົ່າ ແລະ ສຳປະທານ ແລະ ຕ້ານສະກັດກັ້ນ-ແກ້ໄຂບັນຫາຢາເສບຕິດຢູ່ແຂວງສາລະວັນ; ໄດ້ອອກຄຳແນະນຳຂອງຄະນະປະຈຳ ສພຂ ຈຳນວນ 2 ສະບັບ ເພື່ອແນະນຳການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ກ່ຽວກັບການແກ້ໄຂບັນຫາຢາເສບຕິດ ແລະ ການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ.

**ການຕົກລົງບັນຫາພື້ນຖານຂອງທ້ອງຖິ່ນ:** ໄດ້ຕົກລົງຮັບຮອງເອົາໂຄງປະກອບກົງຈັກຂອງ ສພຂ, ອົງການປົກຄອງແຂວງ ແລະອົງການໄອຍະການ, ສານປະຊາຊົນແຂວງ; ຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ 5 ປີ ຂອງສພຂ ອົງການໄອຍະການ, ສານປະຊາຊົນແຂວງ, ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງໃນແຕ່ລະໄລຍະ; ໄດ້ຄົ້ນຄວ້າຮັບຮອງເອົາພາລະບົດບາດ ແລະ ກົງຈັກຊ່ວຍວຽກຂອງຄະນະປະຈຳ ສພຂ ໃນຂັ້ນຂະແໜງ ມີ 10 ຂະແໜງການຊ່ວຍວຽກ,



ຮັບຮອງພາລະບົດບາດ ແລະ ສ້າງຕັ້ງຄະນະ ສສຂ ປະຈຳ 8 ເມືອງສຳເລັດ.

**ດ້ານການຕິດຕາມກວດກາ:** ຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານຂອງແຂວງ ເປັນຕົ້ນແມ່ນຕິດຕາມກວດກາໂຄງການລົງທຶນຂອງລັດ ທີ່ສະພາຮັບຮອງເຊັ່ນ ການສະເໜີອ່ວຍໂຄງການ, ການສະເໜີ ດັດແກ້ໜ້າວຽກໂຄງການເຊົ່າ-ສຳປະທານທີ່ດິນ ແລະ ອື່ນໆ; ຕິດຕາມກວດກາ ແລະ ເກັບກຳຂໍ້ມູນ ກ່ຽວກັບການປະເມີນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ທີ່ຕິດພັນກັບວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ, ຢູ່ບັນດາພະແນກການ ແລະ ເມືອງຈຳນວນ 3 ຄັ້ງ, ພ້ອມທັງລາຍງານຜົນການຕິດຕາມກວດກາໃຫ້ ສພຊ; ເຄື່ອນໄຫວຊຸກຍູ້ຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານຕິດພັນກັບ 2 ວາລະແຫ່ງຊາດໃນ 8 ເມືອງ; ໄດ້ຮັບຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນທັງໝົດ ຈຳນວນ 4 ເລື່ອງ ໄດ້ແກ້ໄຂສຳເລັດ ແລະ ຮັບຄຳສະເໜີຂອງປະຊາຊົນ ທັງໝົດ ຈຳນວນ 18 ເລື່ອງ, ສາມາດຄົ້ນຄວ້າພິຈາລະນາ ແລະ ຈັດສົ່ງໃຫ້ພາກສ່ວນກ່ຽວຂ້ອງສຳເລັດ 16 ເລື່ອງ, ຍັງຄ້າງ 2 ເລື່ອງ; ໄດ້ຮັບໂທລະສັບສາຍດ່ວນຈາກກອງປະຊຸມຄັ້ງປະຖົມມະລຶກ ແລະ ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຊ ແລະ ສພຂ ມີທັງໝົດ 5 ສາຍ ສາມາດຄົ້ນຄວ້າພິຈາລະນາ ແລະ ຈັດສົ່ງໃຫ້ພາກສ່ວນກ່ຽວຂ້ອງແກ້ໄຂໄດ້ສຳເລັດ. ພິເສດ ໃນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຂ ໄດ້ປະເມີນບຸກຄະລາກອນ ທີ່ສະພາເລືອກຕັ້ງ ແລະ ຮັບຮອງການແຕ່ງຕັ້ງຈຳນວນ 43 ທ່ານ ເຊິ່ງມີບົດລາຍງານສະເພາະໃຫ້ຂັ້ນເທິງຮັບຊາບ.

ປະທານຄະນະ ສສຊ ເຂດເລືອກຕັ້ງທີ 14 ຍັງໃຫ້ຮູ້ຕື່ມວ່າ: ແຕ່ກອງປະຊຸມຄັ້ງປະຖົມມະລຶກຂອງ ສພຊ ຊຸດທີ II ຮອດປັດຈຸບັນ ຄະນະ ສສຊ ເຂດ 14 ກໍຄື ສພຂ ມີຜົນສຳເລັດໃນການເຜີຍແຜ່ ແລະ ຈັດຕັ້ງລັດຖະທຳມະນູນກົດໝາຍ, ມະຕິກອງປະຊຸມ ສພຊ, ສພຂ ແລະ ບັນດານິຕິກຳໃຕ້ກົດໝາຍ ຄື: ໄດ້ພົບປະ ແລະ ເຄື່ອນໄຫວເຜີຍແຜ່ມະຕິຂອງ ສພຊ ແລະ ສພຂ ໄດ້ 43 ຄັ້ງມີຜູ້ເຂົ້າຮ່ວມ 9.638 ເທື່ອຄົນ ຍິງ 3.935 ເທື່ອຄົນ. ການລົງພົບປະຜູ້ມີສິດເລືອກຕັ້ງໃນແຕ່ລະຄັ້ງ ໄດ້ຮັບຟັງຄຳຄິດເຫັນ, ຄວາມມຸ່ງມາດປາຖະໜາ, ຂໍ້ສະເໜີຂອງປະຊາຊົນທີ່ສະເໜີຕໍ່ ສສຊ, ສສຂ ບັນຫາໃດທີ່ສາມາດແກ້ໄຂໄດ້ ກໍແກ້ໄຂຊີ້ແຈ້ງກັບທີ່ສ່ວນບັນຫາທີ່ບໍ່ສາມາດແກ້ໄຂໄດ້ກໍໄດ້ເກັບກຳສັງລວມແລ້ວຈັດສົ່ງໃຫ້ພາກສ່ວນກ່ຽວຂ້ອງໃນຂັ້ນເມືອງ, ຂັ້ນແຂວງ.

ທ່ານໃຫ້ຮູ້ຕື່ມວ່າ: ຄຽງຄູ່ກັບດ້ານດີ, ຜົນສຳເລັດໃນຜ່ານມາ ກໍຍັງມີຈຸດອ່ອນຄົງຄ້າງຈຳນວນໜຶ່ງ ເຊັ່ນ: ການນຳເອົາຮ່າງກົດໝາຍ ແລະ ນິຕິກຳທີ່ສຳຄັນຂອງແຂວງ ໄປທາບທາມຄຳຄິດຄຳເຫັນຈາກປະຊາຊົນ ແລະ ເປົ້າໝາຍກ່ຽວຂ້ອງ ບໍ່ທັນກວ້າງຂວາງເລິກເຊິ່ງ; ການໂຄສະນາເຜີຍແຜ່ກົດໝາຍ ທີ່ຕິດພັນກັບການດຳລົງຊີວິດ ແລະ ການທຳມາຫາກິນຂອງປະຊາຊົນບັນດາເຜົ່າ ບໍ່ທັນກວ້າງຂວາງ; ການຕິດຕາມກວດກາ, ຊຸກຍູ້ການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານຂອງແຂວງ ຍັງເຮັດບໍ່ໄດ້ດີບາງຄາດໝາຍບໍ່ທັນບັນລຸໄດ້ຕາມລະດັບຄາດໝາຍ; ການແກ້ໄຂຄວາມທຸກຍັງບໍ່ທັນສຳເລັດ, ໃນບາງດ້ານການພັດທະນາເສດຖະກິດ-ສັງຄົມ ຍັງບໍ່ທັນຕິດ ແໜ້ນກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ກໍໃຫ້ເກີດການຮ້ອງທຸກ, ຮ້ອງຂໍຄວາມເປັນທຳໃນບາງກິດຈະການ; ການປະຕິບັດສອງວາລະແຫ່ງຊາດ ຍັງບໍ່ທັນເດັດຂາດ, ໂປ່ງໃສ ແລະ ເຮັດໄດ້ແບບມືອາຊີບແທ້, ໃນບາງວຽກຍັງເຮັດຄືວາລະປົກກະຕິ, ຄວາມຮັບຮູ້ເຂົ້າໃຈບໍ່ທັນເລິກເຊິ່ງ ການຈັດຕັ້ງປະຕິບັດພົບຂໍ້ຫຍຸ້ງຍາກ, ແຜນປະຕິບັດງານບາງດ້ານບໍ່ລະອຽດ, ແຜນແບ່ງຄວາມຮັບຜິດຊອບບໍ່ຈະແຈ້ງ ແລະ ຂາດເຂີນງົບປະມານໃນການຈັ້ດຕັ້ງປະຕິບັດ; ການປະຕິບັດໜ້າທີ່ຂອງ ສສຊ ແລະ ສສຂ ບໍ່ທັນຄົບຖ້ວນຕາມພາລະບົດບາດ, ຍ້ອນຂີດຄວາມສາມາດຍັງຈຳກັດ, ສະພາບການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ຄວາມຫຍຸ້ງຍາກທາງດ້ານເສດຖະກິດຂອງປະເທດຊາດ ແລະ ອື່ນໆ.

ໃນຕອນທ້າຍ, ທ່ານ ເຮັງ ທອມສົມບັດ ໄດ້ສະແດງຄວາມຂອບໃຈຢ່າງສູງ ຕໍ່ການນຳພັກ-ລັດ, ປະຊາຊົນລາວບັນດາເຜົ່າໃນທົ່ວປະເທດເວົ້າລວມ ເວົ້າສະເພາະກໍຄືການນຳຂອງແຂວງສາລະວັນ ທີ່ຍາມໃດກໍໄດ້ເອົາໃຈໃສ່ນຳພາ-ຊີ້ນຳຢ່າງໃກ້ຊິດ ຕໍ່ວຽກງານຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງ ຕະຫລອດຮອດປະຊາຊົນບັນດາເຜົ່າຊາວແຂວງສາລະວັນ ທີ່ໄດ້ເອົາໃຈໃສ່ປະກອບສ່ວນ ແລະ ອຳນວຍຄວາມສະດວກ ໃຫ້ແກ່ການເຄື່ອນໄຫວປະຕິບັດພາລະບົດບາດຂອງ ສສຊ ໄດ້ຮັບຜົນສຳເລັດໃນຫລາຍດ້ານ.

# ສພຂ ອັດຕະປື ເຊື່ອມຊຶມເອກະສານສຳຄັນຂອງພັກ-ຂອງຊາດ



(ສພຊ) ໃນວັນທີ 31 ສິງຫາ 2022 ສະພາປະຊາຊົນແຂວງ (ສພຂ) ອັດຕະປື ໄດ້ຈັດພິທີເຜີຍແຜ່ເຊື່ອມຊຶມເອກະສານທີ່ສຳຄັນຂອງພັກ ແລະ ຂອງຊາດ ຢູ່ທີ່ຫ້ອງປະຊຸມ ສພຂ ພາຍໃຕ້ການເປັນປະທານຂອງສະຫາຍ ນາງ ມີນາພອນ ໄຊສົມພູ ຮອງເລຂາພັກແຂວງ, ປະທານ ສພຂ ອັດຕະປື; ມີສະຫາຍ ນາງ ພອນມະນີ ຊຽນໄຊຍະວົງ ກຳມະການພັກແຂວງ, ຮອງປະທານ ສພຂ, ມີບັນດາສະຫາຍຄະນະພັກ ສພຂ, ຄະນະກຳມະການ, ຄະນະເລຂາທິການ, ຕາງໜ້າຄະນະໂຄສະນາອົບຮົມແຂວງ ພ້ອມດ້ວຍສະມະຊິກພັກ, ພະນັກງານ-ລັດຖະກອນພາຍໃນ ສພຂ ເຂົ້າຮ່ວມທັງໝົດ 51ສະຫາຍ ຍິງ 20 ສະຫາຍ.

ສະຫາຍ ນາງ ມີນາພອນ ໄຊສົມພູ ແລະ ສະຫາຍ ນາງ ພອນມະນີ ຊຽນໄຊຍະວົງ ໄດ້ຜັດປ່ຽນກັນເຜີຍແຜ່ເຊື່ອມຊຶມເອກະສານປະກອບມີ: ເອກະສານເສີມຂະຫຍາຍມູນເຊື້ອຂອງພັກ, ຍົກສູງຄວາມສາມາດການນຳພາຂອງພັກ, ສະກັດກັ້ນ ແລະ ແກ້ໄຂປາກົດການຫຍໍ້ທໍ້ພາຍໃນພັກ, ເຝິກຝົນຫລໍ່ຫລອມຄຸນສົມບັດສິນທຳປະຕິວັດ ແລະ ເອກະສານ 2 ວາລະແຫ່ງຊາດ (ແບບຖາມ-ຕອບ) ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດການເງິນ ແລະ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ແລະ ເອກະສານມະຕິກອງປະຊຸມໃຫ່ຍ ຄັ້ງທີ XI ຂອງພັກ (ແບບຖາມ-ຕອບ) ທັງນີ້, ກໍເພື່ອເຮັດໃຫ້ສະມະຊິກພັກ, ພະນັກງານ-ລັດຖະກອນ ພາຍໃນ ສພຂ ໄດ້ຮັບຮູ້ເຊື່ອມຊຶມເຂົ້າໃຈຢ່າງເລິກເຊິ່ງ ກຳແໜ້ນແນວທາງການປ່ຽນແປງໃໝ່ຂອງພັກ-ລັດ ທີ່ວາງອອກແຕ່ລະໄລຍະ ແລະ ນຳໄປໝູນໃຊ້ເຂົ້າໃນວຽກງານໃຫ້ມີຄວາມເປັນເອກະພາບ ແລະ ມີຜົນສຳເລັດ.

ໂອກາດດັ່ງກ່າວ, ສະຫາຍ ນາງ ມີນາພອນ ໄຊສົມພູ ຍັງໄດ້ໂອ້ລົມເນັ້ນໜັກຕໍ່ກັບສະມາຊິກພັກທຸກສະຫາຍ ໃຫ້ຕື່ນຕົວຫ້າວຫັນເປັນແບບຢ່າງໃຫ້ແກ່ມະຫາຊົນ ເປັນເຈົ້າການປະຕິບັດແນວທາງ, ນະໂຍບາຍຂອງພັກ, ມະຕິຄຳສັ່ງ ກົດລະບຽບພັກ, ລັດຖະທຳມະນູນ ແລະ ກົດໝາຍ ປະກອບສ່ວນເຂົ້າໃນການກໍ່ສ້າງ, ບູລະນະແນວທາງ, ແຜນນະໂຍບາຍຂອງພັກ ແລະ ເຮັດສຳເລັດໜ້າທີ່ ທີ່ພັກ-ລັດ ມອບໝາຍໃຫ້ໃຫ້ປາກົດຜົນເປັນຈິງເທື່ອລະກ້າວ.

(ວິມັດ)

# ເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຢູ່ເມືອງວຽງພູຄາ

(ສພຊ) ວັນທີ 31 ສິງຫາ 2022 ສະພາປະຊາຊົນແຂວງ (ສພຂ) ຫລວງນ້ຳທາ ໄດ້ເຄື່ອນໄຫວເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສພຂ ຊຸດທີ II ຢູ່ເມືອງວຽງພູຄາ ແຂວງຫລວງນ້ຳທາ ລວມທັງໝົດ 2 ຈຸດຄື: ສະໂມສອນເມືອງ ແລະ ບ້ານວຽງສະຫວ່າງ ນຳໂດຍທ່ານ ກົງເຜັດ ແກ້ວບົວພາ ຮອງປະທານ ສພຂ, ທ່ານ ມີໄຊ ມີວິໄລ ເລຂາທິການ ສພຂ ພ້ອມດ້ວຍສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງ; ເຂົ້າຮ່ວມຮັບຟັງມີຄະນະນຳຂອງເມືອງ, ຫົວໜ້າ-ຮອງຫົວໜ້າຫ້ອງການ, ອະດີດການນຳຂອງເມືອງ, ອະດີດພະນັກງານປະຕິວັດອາວຸໂສ, ບຳນານ, ພະນັກງານ-ລັດຖະກອນອ້ອມຂ້າງແຂວງ, ອຳນາດການປົກຄອງບ້ານ ແລະ ປະຊາຊົນເຂົ້າຮ່ວມ 300 ກວ່າທ່ານ.

ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຊ ຊຸດທີ IX ທີ່ນຳມາເຜີຍແຜ່ແມ່ນການພິຈາລະນາ ແລະ ຮັບຮອງເອົາຫລາຍບັນຫາພື້ນຖານສຳຄັນຂອງປະເທດຊາດຄື: ວຽກງານຂອງລັດຖະບານ; ວຽກງານຂອງໄອຍະການປະຊາຊົນສູງສຸດ; ວຽກງານຂອງສະພາແຫ່ງຊາດ; ວຽກງານສ້າງ ແລະ ປັບປຸງກົດໝາຍ ໂດຍໄດ້ລົງຄະແນນສຽງຮັບຮອງເອົາມະຕິກອງປະຊຸມ ສພຊ ທັງໝົດ 20 ສະບັບ ດ້ວຍຄະແນນສຽງເຫັນດີຫລາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ (ສສຊ) ສະເລ່ຍຄະແນນສູງສຸດ 99% ແລະ ຕ່ຳສຸດ 79% ເຊິ່ງຜົນສຳເລັດຂອງກອງປະຊຸມດັ່ງກ່າວ ເປັນການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ເຂົ້າສູ່ຊີວິດຕົວຈິງ, ແມ່ນໝາກຜົນແຫ່ງສະຕິປັນຍາ, ການຍົກສູງຄວາມຮັບຜິດຊອບການເມືອງຂອງບັນດາທ່ານ ສສຊ, ຄວາມຕັດສິນໃຈຂອງລັດຖະບານ, ກະຊວງ, ອົງການທີ່ກ່ຽວຂ້ອງ ທີ່ຈະສືບຕໍ່ພັດທະນາປະເທດຊາດ ໃນສະພາບມີຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້, ນຳເອົາປະເທດຊາດກ້າວຂຶ້ນຢ່າງບໍ່ຢຸດຢັ້ງ.

ພ້ອມນັ້ນ, ຍັງໄດ້ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຫລວງນ້ຳທາ ເຊິ່ງກອງປະຊຸມໄດ້ພິຈາລະນາຮັບຮອງເອົາບັນຫາສຳຄັນຂອງແຂວງຄື: ຮັບຮອງເອົາບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2022 ຂອງແຂວງ; ຮັບຮອງເອົາບົດລາຍງານກ່ຽວກັບການຄຸ້ມຄອງລາຄາສິນຄ້າ ແລະ ການຄຸ້ມຄອງປ້ຳນ້ຳມັນພາຍໃນແຂວງກອງປະຊຸມ; ຮັບຮອງເອົາບຸກຄະລາກອນຂອງອົງການປົກຄອງແຂວງ; ຮັບຮອງຂໍ້ຕົກລົງຂອງເຈົ້າແຂວງໆຫລວງນ້ຳທາ ຈຳນວນ 2 ສະບັບ; ຮັບຮອງເອົາບົດລາຍງານກ່ຽວກັບການເຄື່ອນໄຫວວຽກງານໃນໄລຍະແຕ່ກອງປະຊຸມສະໄໝສາມັນເທື່ອທີ 2 ຫາເທື່ອທີ 3 ແລະ ແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງ ສພຂ ຊຸດທີ II.



ໃນຕອນທ້າຍ, ທ່ານ ກົງເຜັດ ແກ້ວບົວພາ ໄດ້ມີຄຳເຫັນໂອ້ລົມ ແລະ ເນັ້ນໜັກບາງບັນຫາ ເປັນຕົ້ນແມ່ນດ້ານການເມືອງ-ແນວຄິດ ຕິດພັນກັບການປັບປຸງການຈັດຕັ້ງຂັ້ນບ້ານເອົາໃຈໃສ່ເຮັດວຽກງານການເມືອງ-ແນວຄິດ ສຶກສາອົບຮົມໃຫ້ປະຊາຊົນພາຍໃນກຸ່ມບ້ານຈຶ່ງມີແນວຄິດຫລັກໝັ້ນ, ອຸນອ່ຽງທຸນທ່ຽງ ເຊື່ອໝັ້ນ ຕໍ່ການນຳພາ-ຊີ້ນຳຂອງພັກ, ມີຄວາມສາມັກຄີປອງດອງ ໃນການປົກປັກຮັກສາ ແລະ ສ້າງສາພັດທະນາສັງຄົມ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍ ແລະ ຈະເລີນກ້າວໜ້າຂຶ້ນເທື່ອລະກ້າວ; ຄຽງຄູ່ກັນນີ້ ໃຫ້ເອົາໃຈໃສ່ປັບປຸງກົງຈັກການຈັດຕັ້ງບ້ານ ແລະ ບຸກຄະລາກອນ ຕິດພັນກັບການປັບປຸງແບບແຜນວິທີການເຮັດວຽກໃຫ້ມີຄວາມໜັກແໜ້ນເຂັ້ມແຂງ, ສາມາດເຄື່ອນໄຫວຕາມພາລະບົດບາດຂອງຕົນ ໃຫ້ໄດ້ຮັບຜົນດີ; ເອົາໃຈໃສ່ວຽກງານສ້າງເສດຖະກິດຄອບຄົວ, ປະຫຍັດ ເພື່ອແກ້ໄຂຄວາມທຸກຍາກເທື່ອລະກ້າວ, ເພີ່ມທະວີວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຍົກສູງສະຕິເຄົາລົບ ແລະ ປະຕິບັດກົດໝາຍໃຫ້ເຂັ້ມງວດ.



## ສຸກສະບາຍຫາຍໂຣຄາ

# ສາມອາຫານບອກລາຜົມຫງອກກ່ອນໄວ

**ແປ ແລະ ຮຽບຮຽງໂດຍ: ສາວແວ່ນ**



ຜົມຫງອກ ຫລື ຜົມຂາວ ຖ້າມັນເກີດຂຶ້ນຕອນເຖົ້າ ຍັງສາມາດເຂົ້າໃຈໄດ້ວ່າ ມັນເປັນເລື່ອງທຳມະຊາດ ແຕ່ຖ້າເກີດໃນເວລາທີ່ພວກເຮົາອາຍຸບໍ່ຫລາຍ ແຕ່ມີຜົມຫງອກ ອັນນີ້ອາດຈະຖືວ່າຜິດປົກກະຕິ ສ່ວນຫລາຍມັກຈະແກ້ໄຂບັນຫານີ້ດ້ວຍການຍ້ອມຜົມ ເຊິ່ງສາມາດຊ່ວຍ ໄດ້ແຕ່ແນ່ນອນເພາະຕ້ອງຍ້ອມສີເປັນປະຈຳຕະຫລອດ ແຕ່ທ່ານຮູ້ບໍວ່າ ການກິນອາຫານກໍສາມາດຊ່ວຍທ່ານໄດ້ ເນື່ອງຈາກວ່າອາຫານບາງຊະນິດມີຄຸນສົມບັດຊ່ວຍບຳລຸງຜົມ, ເລັບ ແລະ ຜິວໜັງ ຂອງພວກເຮົາໄດ້ຢ່າງມີປະສິດທິພາບ; ຖ້າທ່ານເປັນຄົນໜຶ່ງທີ່ຕ້ອງປະສົບກັບບັນຫາຜົມຂາວກ່ອນໄວ ໃນຄໍລຳສຸກສະບາຍຫາຍໂລຄາສະບັບນີ້, ເຮົາມີສານອາຫານ 4 ຊະນິດທີ່ຢາກນຳສະເໜີແກ່ທ່ານຜູ້ການເພື່ອຊ່ວຍບັນເທົາບັນຫາຜົມຂາວກ່ອນໄວອັນຄວນມີ ດັ່ງນີ້:

- ທອງແດງ ເປັນແຮ່ທາດສຳຄັນໃນຂະບວນການສ້າງເມັດສີເມລານິນ ເຊິ່ງເປັນສານສຳຄັນໃນການສ້າງສີຜົມ ມັກພົບເຫັນຢູ່ໃນຫອຍນາງລົມ, ອາຫານທະເລ, ແລະ ແກ່ນດອກຕາເວັນ (ຫອຍນາງລົມ ແລະ ອາຫານທະເລ ຕ້ອງລະມັດລະວັງ ຄໍແລັດເຕີຣໍ)

- ອາຊິດໂຟລິກ ຊ່ວຍເຮັດໃຫ້ຜົມບໍ່ຫງອກໄວ ມັກມີຢູ່ໃນຜັກໃບຂຽວເຂັ້ມ, ຫົວກາລົດ, ໝາກອຶ ແລະ ປະເພດໝາກຖົ່ວຕ່າງໆ.

- ອາຊິດແພນໂທທານິກ ຫລື ວິຕາມິນບີ 5 ເປັນທາດອາຫານສຳຄັນທີ່ຊ່ວຍຮັກສາເມັດສີພາຍໃນຜົມ ເຮັດໃຫ້ຜົມດຳ ແລະ ຊ່ວຍປ້ອງກັນຜົມຫງອກໄດ້ອີກ ມັກເຫັນຫລາຍໃນເຂົ້າກ່ອງ, ເຂົ້າໂອດ, ສາລີ, ໝາກໂປມ ແລະ ໝາກງາ;

- ພາບາ ແມ່ນສະມາຊິກຂອງກຸ່ມວິຕາມິນ B ລວມ ແລະ ວິຕາມິນທຽມລວມ ທີ່ສາມາດລະລາຍໃນນ້ຳໄດ້ ໂດຍມັກຖືກລວມເຂົ້າກັບກົດໂຟລິກ ທີ່ຊ່ວຍຟື້ນຟູສະພາບສີຜົມ ແລະ ຊ່ວຍບຳລຸງໃຫ້ຊຸມຊື່ນ; ພົບຢູ່ໃນເມັດເຂົ້າສາລີ, ເຂົ້າກ່ອງ, ໂຍເກີດ ແລະ ຜັກໃບຂຽວ.

**https://mgronline.com**

## ສາລາກະວີ

**ບົດກະວີຈາກ ສສ.ຫວຽດນາມ**

ເພື່ອສະເຫລີມສະຫລອງວັນສ້າງຕັ້ງສາຍພົວພັນທາງການທູດ ລາວ-ຫວຽດນາມ ຄົບຮອບ 60 ປີ (5/9/1962-5/9/2022) ແລະ ວັນເຊັນສົນທິສັນຍາມິດຕະພາບ ລາວ-ຫວຽດນາມ ຄົບຮອບ 45 ປີ (18/7/1977-18/7/2022)

### ຂາດເຈົ້າ

**# ໂດຍ: ລີ ທັນ ມາຍ**

◆ ຂາດເຈົ້າ ເຫງົາຫງ່ອມເສົ້າ ພະວົງເຫງົ່າງົງງັນ
ພໍຢາກ ມໍລະນາດັບ ບໍ່ລອດປອງໄປໄດ້
ຊີວິດ ເຂັນຂັດຂ້ອງ ໃນຫົວໃຈຕັນປ່ອງ
ຮັກນີ້ ສຸດໜ່ວງແໜ້ນ ແສນຊິແກ້ບໍ່ຫ່ອນມາຍ ແທ້ນໍ!

◆ ຫາຍໃຈ ສຸດຄັ່ງແຄ້ນ ແສນຕຶບຕັນສະມັກ
ມອງເມີ່ ມວນເມຄາ ຫລັ່ງພະໂຍມຍັງຟ້າ
ສັງມາໄກເກີນເອື້ອມ ລະດູເດືອນດົນຍິ່ງ
ຫລາຍປີ ສຸດອ່າວເອື້ອ ມັນເລີຍລ້ອງລ່ວງນານ

◆ ຍາມນອນ ນອນແນບນິ້ງ ພິງພັກພຽງໝອນ
ຜ້າຫົ່ມ ສູດອາວອນເຖິງ ນັບວັນເວັນຖ້າ
ລາງເທື່ອ ຫລອນໃຫລເພີ້ ລະເມີເຫັນທາງຊ້າງເຜືອກ
ເກົ້າສິບເກົ້າສວ່ານເສັ້ນ ເປັນເວນວຸ້ນຫວັ່ນໃຈ

◆ ສັງມາ ສູດປະຫລາດດ້ວຍ ລະງຶມໄຕ່ຝູງມົດ ນີ້ນໍ!
ກໍຫາກ ຟັງຍັງສຽງ ກິ່ນດິນດັນພື້ນ
ນັ້ນຄື ສຽງກະສັນຊໍ້າ ລະກຳໃຈຍາມເຈົ້າຈາກ
ຄ້າຍຄື ສຽງເສບໃຫ້ ຫົວໃຈເສົ້າບໍ່ສວ່າງເຊົາ ແທ້ນາ!

## ເບີໂທສຸກເສີນ

**o ຕຳຫລວດ**

- ປກສ ນະຄອນຫລວງ 021 419119
- ກົມຕຳຫລວດສືບສວນ-ສອບສວນ 021 970093
- ກົມຕຳຫລວດປ້ອງກັນຢາເສບຕິດ 021 217258
- ກົມຕຳຫລວດເສດຖະກິດ 021 212519
- ກົມຕຳຫລວດຈະລາຈອນ 021 900927
- ກົມຕຳຫລວດສະກັດກັ້ນ ແລະຕ້ານການຄ້າມະນຸດ 021 970543
- ກົມຕຳຫລວດກວດຄົນເຂົ້າເມືອງ (ຕມ) 021 251287
- ກົມຄຸ້ມຄອງຄົນຕ່າງປະເທດ 021 212520
- ສາຍດ່ວນ 1191

**o ໜ່ວຍກູ້ໄພ**

- ສະມາຄົມອາສາກູ້ໄພນະຄອນຫລວງ 1624
- ໜ່ວຍກູ້ໄພມູນນິທິຊ່ວຍເຫລືອຄົນທຸກຍາກ 1623
- ໜ່ວຍຊ່ວຍເຫລືອຜູ້ປະສົບໄພ ອົງການກາແດງ 1625
- ມູນນິທິ ກູ້ໄພ ນາຄາ 1513

**o ໂຮງໝໍ**

- ມະໂຫສົດ 021 214018
- ມິດຕະພາບ 150 ຕຽງ 021 710006



## ທັກທາຍ ລະບາຍ

**# ສາວຈົ້ມ**

*(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເສັ່ງພິທີການ)*

☙ **ຊົມ**ເຊີຍວັນສ້າງຕັ້ງສາຍພົວພັນການທູດ ລາວ-ຫວຽດນາມ **ຄົບຮອບ 60 ປີ (5 ກັນຍາ 1962-5 ກັນຍາ 2022)** ບັນຍາກາດຄຶກຄື້ນ ມ່ວນຊື່ນສະເຫລີມສະຫລອງ ສາຍພົວພັນປອງດອງ ຫວຽດ-ລາວຄາວເຍີ້ນ ບັງເອີນໜັງສືພິມ **"ຜູ້ແທນປະຊາຊົນ"** ສະບັບນີ້ ມີບົດກະວີເພື່ອນມາຮ່ວມ ລົງຄໍລຳ **"ສາລາກະວີ"** ເອກອ້າງ ເຊີນຕິດຕາມພ້ອມອ່ານຕໍ່ໄປ **ທ່ານເອີຍ!**

☙ **ຜ່ານ**ພົ້ນໄປ ສຳລັບ**ບຸນທ່ຽວເຂົ້າສະຫລາກ**ກາງພັນສາ ເຫັນວ່າຫລາຍຄົນຕ່າງກໍມຸ່ງໜ້າເຂົ້າວັດວາອາຮາມ ເພື່ອຕັກບາດຢາດນ້ຳ ທຳບຸນຕາມປະເພນີ ບຸນນີ້ເລີຍລ່ວງຂ້າມ ເຕືອນບອກວັນເວລາ **ອີກໜຶ່ງເດືອນອອກພັນສາ** ຊ່ວງເຮືອຊິງແຊ່ນແນມຢູ່ເດີປີນີ້ ຊິມີງານຄືເກົ່າ ບໍ່ບໍ່ ເພາະສອງສາມປີຜ່ານພົ້ນໂຄວິດອົບປ່ອນວຸ້ນ ບຸນຊ່ວງເຮືອກໍເລື່ອນຍ້າຍ ເພາະໂລຄາຮ້າຍປ່ອນສັງຄົມ **ນັ້ນນາ!**

☙ **ສະ**ແດງຄວາມເສຍໃຈນຳ ຄອບຄົວເອື້ອຍ**ໄກສອນ ແກ້ວມະນີໂຄດ** ກົມຕ່າງປະເທດ ສະພາແຫ່ງຊາດ ທີ່ສູນເສຍຍາດທີ່ແສນເຄົາລົບຮັກ **(ແມ່ເຖົ້າທອດ)** ດ້ວຍໂລກຊະລາ ລວມອາຍຸໄດ້ ໜຶ່ງຮ້ອຍແປດປີ ບາລະມີທີ່ທອດສ້າງ ສະສົມຜ່ານກາຍມາ ຈົ່ງໂປຣດຈົ່ງນຳພາ ທອດເດີນທາງລົ້ນ ແດນສະຫວັນນິບເບື້ອງ ຄົນເຮົາຊາບຊ່າ **ນັ້ນຫອນ!** ຈົ່ງໃຫ້ແມ່ເຖົ້າທອດ ໄປເປັນນາງຟ້າບ່ອນເບື້ອງ ສວງສະຫວັນພຸ້ນ ບ່ອນໜາຍ **ທອດເອີຍ!**

## ຊວນຍິ້ມ

**# ແອ່ນຕຸ້ງ**

**ເລື່ອງ: ຄິດຄືພໍ່**

ສອງພໍ່ລູກລົມກັບຕາມປະສາຜູ້ຊາຍ

**ພໍ່:** ບັກກີ ມຶງຢາກໄດ້ຜູ້ຍິງແບບໃດ ບອກພໍ່ໃດ?
**ກີ:** ຢາກໄດ້ຜູ້ຍິງຄືກັບເດືອນ
**ພໍ່:** ສະແດງວ່າຢາກໄດ້ແບບງາມ ແລະ ງຽບເບາະ?
**ກີ:** ບໍ່ແມ່ນ
**ພໍ່:** ອ້າວ! ເປັນແບບໃດຊັ້ນ
**ກີ:** ຢາກໃຫ້ມາແຕ່ກາງຄືນ ຕື່ນເຊົ້າມາລະເມືອ
**ພໍ່:** ???



## ຄະຕິເຕືອນໃຈ

**# ດອກຊະຍອມ**

ໃຈໜັກໄດ້ກິນເຂົ້າ
ໃຈເບົາໄດ້ກິນກອຍທໍ່ໃຫຍ່

# ກົດໝາຍວ່າດ້ວຍການຄວບຄຸມຢາສູບ (ສະບັບປັບປຸງ)

ຕໍ່ຈາກສະບັບກ່ອນ...

**ມາດຕາ 36 (ປັບປຸງ) ການຊ່ວຍເຫຼືອຜູ້ຕ້ອງການອອກຢາສູບ**

ການຊ່ວຍເຫຼືອຜູ້ຕ້ອງການອອກຢາສູບ ມີ ດັ່ງນີ້:

1. ອະທິບາຍ, ຊີ້ແຈງຜົນຮ້າຍຂອງການຊົມໃຊ້ຢາສູບ ແລະ ການໄດ້ຮັບຄວັນຢາສູບມືສອງ;
2. ແນະນຳຜົນດີຂອງການບໍ່ຊົມໃຊ້ຢາສູບ, ໃຫ້ຄຳປຶກສາ ແລະ ແນະນຳວິທີການອອກຢາສູບ;
3. ຕິດຕາມຄວາມຄືບໜ້າຂອງການອອກຢາສູບ;
4. ຈັດກິດຈະກຳຕ່າງໆ ເພື່ອສົ່ງເສີມການອອກຢາສູບ;
5. ນຳໃຊ້ວິທີອື່ນ ທີ່ເຫັນວ່າມີຄວາມເໝາະສົມ.

ໂຮງໝໍ ສູນກາງ, ພາກ, ຂັ້ນ ແຂວງ, ເມືອງ ແລະ ໂຮງໝໍນ້ອຍ ຕ້ອງເຊື່ອມສານວຽກງານໃຫ້ ຄຳປຶກສາ ແລະ ຊ່ວຍເຫຼືອຜູ້ທີ່ຕ້ອງການອອກຢາສູບ ເຂົ້າໃນໂຄງປະກອບການບໍລິການສາທາລະນະສຸກ ທີ່ມີຢູ່.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ສາມາດໃຫ້ຄຳປຶກສາ ແລະ ຊ່ວຍເຫຼືອ ຜູ້ທີ່ຕ້ອງການອອກຢາສູບ ໂດຍບໍ່ເສຍຄ່າ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 37 ການຊ່ວຍເຫຼືອຜູ້ໄດ້ຮັບຄວັນຢາສູບ**

ຜູ້ໄດ້ຮັບຄວັນຢາສູບ ຕ້ອງໄດ້ຮັບການຊ່ວຍເຫຼືອ ດ້ວຍການແນະນຳກ່ຽວກັບຜົນຮ້າຍຂອງຄວັນຢາສູບ, ເປັນເຈົ້າການປົກປ້ອງຕົນເອງ ດ້ວຍການອອກຫ່າງຈາກຜູ້ສູບຢາ ຫຼື ມີສິດສະເໜີໃຫ້ຜູ້ສູບຢາໄປສູບຢູ່ບ່ອນອື່ນທີ່ຫ່າງຈາກຕົນ. ເມື່ອໄດ້ຮັບຜົນຮ້າຍ, ເຈັບເປັນຈາກຄວັນຢາສູບແລ້ວ ຜູ້ກ່ຽວກໍມີສິດໄດ້ຮັບການຊ່ວຍເຫຼືອ, ເບິ່ງແຍງ ແລະ ປິ່ນປົວ ຕາມເງື່ອນໄຂຕົວຈິງ.

### ພາກທີ VI
### ຄວາມຮັບຜິດຊອບກ່ຽວກັບການຄວບຄຸມຢາສູບ

**ມາດຕາ 38 (ປັບປຸງ) ຄວາມຮັບຜິດຊອບຂອງລັດ**

ລັດ ມີຄວາມຮັບຜິດຊອບໃນການຄວບຄຸມ, ຄຸ້ມຄອງ, ຕິດຕາມກວດກາ ວຽກງານຄວບຄຸມຢາສູບ ດ້ວຍການວາງນະໂຍບາຍ, ກົດໝາຍ, ສ້າງເງື່ອນໄຂ, ອຳນວຍຄວາມສະດວກ, ຊ່ວຍເຫຼືອຜູ້ຕ້ອງການອອກຢາສູບ ແລະ ປິ່ນປົວຜູ້ໄດ້ຮັບຜົນຮ້າຍຈາກການຊົມໃຊ້ຢາສູບ ແລະ ການໄດ້ຮັບຄວັນຢາສູບມືສອງ.

**ມາດຕາ 39 (ປັບປຸງ) ຄວາມຮັບຜິດຊອບຂອງການຈັດຕັ້ງພາກລັດ**

ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ກຳນົດຈຸດປະສານງານ, ຕິດຕາມກວດກາວຽກງານຄວບຄຸມຢາສູບ ໂດຍປະສານສົມທົບກັບຄະນະກຳມະການເພື່ອການຄວບຄຸມຢາສູບແຕ່ລະຂັ້ນ.

**ມາດຕາ 40 (ໃໝ່) ຄວາມຮັບຜິດຊອບຂອງພາກເອກະຊົນ**

ພາກເອກະຊົນ ມີຄວາມຮັບຜິດຊອບ ໃນການປະກອບສ່ວນຈັດຕັ້ງປະຕິບັດວຽກງານຄວບຄຸມຢາສູບ ເປັນຕົ້ນ ການໂຄສະນາ, ຊ່ວຍເຫຼືອຜູ້ຕ້ອງການອອກຢາສູບ, ຈັດສະຖານທີ່ຫ້າມສູບຢາ, ຈັດບ່ອນສະເພາະໃຫ້ສູບຢາ ແລະ ໃຫ້ການຮ່ວມມືກັບອົງການທີ່ກ່ຽວຂ້ອງຂອງລັດແຕ່ລະຂັ້ນ.

**ມາດຕາ 41 (ປັບປຸງ) ຄວາມຮັບຜິດຊອບຂອງຊຸມຊົນ ແລະ ສັງຄົມ**

ຊຸມຊົນ ແລະ ສັງຄົມ ມີຄວາມຮັບຜິດຊອບຮ່ວມມືກັບຂະແໜງການທີ່ກ່ຽວຂ້ອງ ກ່ຽວກັບວຽກງານຄວບຄຸມຢາສູບ ເປັນຕົ້ນ ການໂຄສະນາ ເຜີຍແຜ່, ປຸກລະດົມ ໃຫ້ທຸກຊັ້ນຄົນເຫັນໄດ້ຜົນຮ້າຍຂອງການຊົມໃຊ້ຢາສູບ, ການໄດ້ຮັບຄວັນຢາສູບມືສອງ, ການສ້າງຄ່ານິຍົມໃນການບໍ່ຊົມໃຊ້ຢາສູບ, ສ້າງໃຫ້ຊຸມຊົນປອດຄວັນຢາສູບ ແລະ ຊຸກຍູ້ໃຫ້ຜູ້ສູບຢາອອກຢາສູບ.

**ມາດຕາ 42 (ປັບປຸງ) ຄວາມຮັບຜິດຊອບຂອງຄອບຄົວ**

ຄອບຄົວ ມີບົດບາດສຳຄັນ ແລະ ມີຄວາມຮັບຜິດຊອບຮ່ວມກັນໃນການສຶກສາອົບຮົມ, ລະດົມໃຫ້ສະມາຊິກຄອບຄົວບໍ່ຊົມໃຊ້ຢາສູບ, ອອກຢາສູບ, ໃຫ້ຄຳແນະນຳແກ່ສະມາຊິກຄອບຄົວເຂົ້າໃຈ, ຮັບຮູ້ເຖິງຜົນຮ້າຍຂອງການຊົມໃຊ້ຢາສູບ ແລະ ການໄດ້ຮັບຄວັນຢາສູບມືສອງ ເພື່ອໃຫ້ເປັນຄອບຄົວຕົວແບບປອດຄວັນຢາສູບ.

**ມາດຕາ 43 (ປັບປຸງ) ຄວາມຮັບຜິດຊອບຂອງບຸກຄົນ**

ບຸກຄົນ ມີຄວາມຮັບຜິດຊອບ ເປັນເຈົ້າຕົນເອງໃນການຫ່າງໄກຈາກຢາສູບ ແລະ ປົກປ້ອງຕົນເອງຈາກການໄດ້ຮັບຄວັນຢາສູບມືສອງ, ເປັນແບບຢ່າງແກ່ບຸກຄົນອື່ນໃນການບໍ່ຊົມໃຊ້ຢາສູບ ແລະ ອອກຢາສູບ, ຫຼີກເວັ້ນການຊວນເຊື່ອໃຫ້ຊົມໃຊ້ຢາສູບ, ສູບຢາໃນສະຖານທີ່ອະນຸຍາດໃຫ້ສູບ, ປະກອບສ່ວນ ແລະ ເຂົ້າຮ່ວມໃນກິດຈະກຳຄວບຄຸມຢາສູບ, ໂຄສະນາ ເຜີຍແຜ່ ຂໍ້ມູນ-ຂ່າວສານກ່ຽວກັບຜົນຮ້າຍຂອງການຊົມໃຊ້ຢາສູບ ແລະ ການໄດ້ຮັບຄວັນຢາສູບມືສອງ.

### ພາກທີ VII
### ກອງທຶນຄວບຄຸມຢາສູບ

**ມາດຕາ 44 (ປັບປຸງ) ກອງທຶນຄວບຄຸມຢາສູບ**

ກອງທຶນຄວບຄຸມຢາສູບ ແມ່ນ ກອງທຶນສົ່ງເສີມສຸຂະພາບ ທີ່ລັດຖະບານ ແຫ່ງ ສປປລາວ ສ້າງຕັ້ງຂຶ້ນ ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດກົດໝາຍສະບັບນີ້ ຊຶ່ງຢູ່ພາຍໃຕ້ການຊີ້ນຳໂດຍກົງຂອງຄະນະກຳມະການແຫ່ງຊາດເພື່ອການຄວບຄຸມຢາສູບ ທີ່ມີໜ້າທີ່ ໃນການຄຸ້ມຄອງການເຄື່ອນໄຫວວຽກງານຂອງກອງທຶນ ໃຫ້ມີຄວາມໂປ່ງໃສ ແລະ ມີປະສິດທິຜົນ.

ລັດ ອະນຸຍາດ ໃຫ້ສ້າງຕັ້ງກອງທຶນຄວບຄຸມຢາສູບ ເພື່ອຮັບໃຊ້ວຽກງານຄວບຄຸມຢາສູບ.

**ມາດຕາ 45 (ປັບປຸງ) ແຫຼ່ງຂອງກອງທຶນຄວບຄຸມຢາສູບ**

ກອງທຶນຄວບຄຸມຢາສູບ ໄດ້ມາຈາກແຫຼ່ງ ຕົ້ນຕໍ ດັ່ງນີ້:

1. ງົບປະມານຂອງລັດ;
2. ສອງສ່ວນຮ້ອຍ ເກັບເພີ່ມຈາກອາກອນຊົມໃຊ້ຜະລິດຕະພັນຢາສູບທີ່ລັດຈັດເກັບ ແລະ ເພີ່ມຂຶ້ນໜຶ່ງສ່ວນຮ້ອຍ ໃນທຸກ ສອງປີ;
3. ສອງຮ້ອຍກີບ ຕໍ່ຊອງ ຂອງຜະລິດຕະພັນຢາສູບ ທຸກປະເພດທີ່ຜະລິດພາຍໃນ ແລະ ນຳເຂົ້າຈາກຕ່າງປະເທດ ແລະ ເພີ່ມຂຶ້ນ ສອງຮ້ອຍກີບ ຕໍ່ຊອງໃນທຸກ ສອງປີ;
4. ການບໍລິຈາກຂອງ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາກລັດ ແລະ ເອກະຊົນທັງພາຍໃນ, ຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ຍົກເວັ້ນການບໍລິຈາກ ແລະ/ຫຼື ອຸປະຖຳຈາກອຸດສາຫະກຳຢາສູບ ແລະ ຜູ້ປະກອບການ;
5. ການເຄື່ອນໄຫວກິດຈະກຳຫາລາຍໄດ້ທີ່ຖືກຕ້ອງ ເພື່ອວຽກງານຄວບຄຸມຢາສູບ.

**ມາດຕາ 46 (ປັບປຸງ) ການຄຸ້ມຄອງ ແລະ ນຳໃຊ້ກອງທຶນຄວບຄຸມຢາສູບ**

ກະຊວງສາທາລະນະສຸກ ເປັນຜູ້ຄຸ້ມຄອງ, ບໍລິຫານກອງທຶນຄວບຄຸມຢາສູບ ພາຍໃຕ້ການຊີ້ນຳຂອງຄະນະກຳມະການແຫ່ງຊາດເພື່ອການຄວບຄຸມຢາສູບ.

ກອງທຶນຄວບຄຸມຢາສູບ ໃຫ້ນຳໃຊ້ເຂົ້າໃນເປົ້າໝາຍ ດັ່ງນີ້:

1. ການເຄື່ອນໄຫວວຽກງານຂອງຄະນະກຳມະການເພື່ອການຄວບຄຸມຢາສູບ ແຕ່ລະຂັ້ນ ແລະ ການຄຸ້ມຄອງບໍລິຫານກອງທຶນ;
2. ການຈັດຕັ້ງປະຕິບັດວຽກງານຄວບຄຸມຢາສູບ;
3. ການປະກອບສ່ວນເຂົ້າໃນການປັບປຸງຄຸນນະພາບການບໍລິການສາທາລະນະສຸກ;
4. ການປະກອບສ່ວນເຂົ້າໃນກອງທຶນປະກັນສຸຂະພາບແຫ່ງຊາດ.

ການນຳໃຊ້ກອງທຶນຄວບຄຸມຢາສູບຂອງພາກສ່ວນອື່ນທີ່ກ່ຽວຂ້ອງຕ້ອງປະຕິບັດຕາມແຜນງານ ແລະ ແຜນກິດຈະກຳ ຢ່າງເຂັ້ມງວດ.

ທຸກລາຍຮັບ ແລະ ລາຍຈ່າຍ ຕ້ອງຜ່ານລະບົບບັນຊີຂອງຄັງເງິນແຫ່ງຊາດ, ລົງບັນຊີຕາມຫຼັກການ ແລະ ລະບຽບການພື້ນຖານການບັນຊີແຫ່ງລັດ.

ສຳລັບ ລາຍລະອຽດກ່ຽວກັບການຄຸ້ມຄອງບໍລິຫານ ແລະ ນຳໃຊ້ກອງທຶນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

### ພາກທີ VIII
### ຂໍ້ຫ້າມ

**ມາດຕາ 47 (ປັບປຸງ) ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ຄອບຄົວ, ຊຸມຊົນ, ສັງຄົມ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ສະໜັບສະໜູນການໂຄສະນາ ແລະ ສົ່ງເສີມໃຫ້ຊົມໃຊ້ຜະລິດຕະພັນຢາສູບ;
2. ສູບຢາໃນສະຖານທີ່ຫ້າມສູບ;
3. ຊົມໃຊ້ຜະລິດຕະພັນຢາສູບຮູບແບບໃໝ່ ເປັນຕົ້ນ ຢາສູບໄຟຟ້າ, ຢາສູບລະເຫີຍອາຍ, ຢາສູບຊີຊາ ຫຼື ບາຣາກູ;
4. ໃຫ້ເດັກທີ່ມີອາຍຸຕໍ່າກວ່າ ສິບແປດປີ ຊົມໃຊ້ຢາສູບ;
5. ຊັກຊວນເດັກທີ່ມີອາຍຸຕໍ່າກວ່າ ສິບແປດປີ ຊົມໃຊ້ຢາສູບ ແລະ ຊື້ ຂາຍ ຜະລິດຕະພັນຢາສູບ;
6. ເຂົ້າຮ່ວມການຜະລິດ, ນຳເຂົ້າ, ສົ່ງອອກ, ຊື້ ຫຼື ຂາຍ ຜະລິດຕະພັນຢາສູບ ທີ່ບໍ່ຖືກຕ້ອງ ຕາມກົດໝາຍ;
7. ຮັບເອົາການອຸປະຖຳ ແລະ ສະໜັບສະໜູນຈາກບໍລິສັດຢາສູບ, ຜູ້ປະກອບການໂດຍທາງກົງ ແລະ ທາງອ້ອມ ທີ່ເປັນເງິນສົດ, ການກູ້ຢືມ, ລາງວັນ, ທຶນສຳລັບການຄົ້ນຄວ້າ, ວິໄຈ, ທຶນການສຶກສາ, ພາຫະນະ, ວັດຖຸປະກອນ, ເຄື່ອງຕ້ອນ, ຂອງຝາກ, ຂອງຂວັນ ລວມທັງ ການຮັບຮອງ ຫຼື ເຂົ້າຮ່ວມກິດຈະກຳ ທີ່ສະແດງເຖິງຄວາມຮັບຜິດຊອບຕໍ່ສັງຄົມຂອງບໍລິສັດຢາສູບ ເພື່ອຜົນປະໂຫຍດທາງດ້ານການຄ້າ, ຍົກເວັ້ນການປະຕິບັດພັນທະໃຫ້ແກ່ລັດຖະບານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;
8. ໂຄສະນາຜະລິດຕະພັນຢາສູບໃນທຸກຮູບແບບ;
9. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 48 (ປັບປຸງ) ຂໍ້ຫ້າມສຳລັບບໍລິສັດຢາສູບ ແລະ ຜູ້ປະກອບການ**

ຫ້າມ ບໍລິສັດຢາສູບ ແລະ ຜູ້ປະກອບການ ມີພຶດຕິກຳ ດັ່ງນີ້:

1. ຜະລິດ, ນຳເຂົ້າ, ສົ່ງອອກ, ຈຳໜ່າຍ, ຊື້ ຂາຍ ຜະລິດຕະພັນຢາສູບທີ່ບໍ່ມີຄຳເຕືອນສຸ ຂະພາບ ແລະ ສະຫຼາກ, ວັນ, ເດືອນ, ປີ ຜະລິດ, ສະແຕັມພາສີ, ອາກອນ, ຢາສູບນອກລະບົບ, ເຖື່ອນ, ເສຍຄຸນ, ຜະລິດຕະພັນຢາສູບຮຽນແບບ ຫຼື ປອມ;
2. ຜະລິດ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ, ຊື້ ຂາຍ ຜະລິດຕະພັນຢາສູບຮູບແບບໃໝ່ ເປັນຕົ້ນ ຢາສູບໄຟຟ້າ, ຢາສູບລະເຫີຍອາຍ, ຢາສູບຊີຊາ ຫຼື ບາຣາກູ;
3. ຜະລິດຢາສູບທີ່ບັນຈຸຫຼູດ ຫຼື ເກີນ ຊາວກອກ ຕໍ່ໜຶ່ງຊອງ, ສິບຊອງຕໍ່ໜຶ່ງຕຸດ, ຫ້າສິບຕຸດຕໍ່ໜຶ່ງຫີບ;
4. ຂາຍຜະລິດຕະພັນຢາສູບ ໂດຍຜ່ານທາງສື່ເອເລັກໂຕຣນິກ ຫຼື ສື່ສັງຄົມອອນລາຍ;
5. ຂາຍຜະລິດຕະພັນຢາສູບໂດຍແຈກ, ແຖມຜະລິດຕະພັນຢາສູບຕົວຢ່າງ, ຫຼູດລາຄາ,ໃຫ້ລ້າ, ແລກປ່ຽນຜະລິດຕະພັນຢາສູບ ກັບສິນຄ້າອື່ນ ຫຼື ໃຫ້ຜົນປະໂຫຍດອື່ນ;
6. ຂາຍຜະລິດຕະພັນຢາສູບ ດ້ວຍເຄື່ອງຈັກຂາຍຢາສູບແບບອັດຕະໂນມັດ;

ອ່ານຕໍ່ສະບັບໜ້າ...




## ຂໍ້ຄິດໃນບຸນຫໍ່ເຂົ້າສະຫລາກ

ໂດຍ: ດົ້ນກົບເມກ

ປະເພນີບຸນຫໍ່ເຂົ້າສະຫລາກ ຄົນລາວເຮົາເຮັດໃນມື້ເພັງ 15 ຄ່ຳ ເດືອນ 10 ເຊິ່ງປີນີ້ກົງກັບວັນທີ 10 ກັນຍາ 2022 ຖັດຈາກບຸນຫໍ່ເຂົ້າປະດັບດິນ, ບຸນຫໍ່ເຂົ້າສະຫລາກມີຂໍ້ຄິດທີ່ແຝງໄວ້ໃຫ້ຜູ້ມີປັນຍາແທງຊອດໄດ້ຮູ້ຄວາມໝາຍ ເພື່ອສືບທອດພູມປັນຍາບັນພະບູລຸດ, ຜູ້ຂຽນເຫັນວ່າ ບຸນຫໍ່ເຂົ້າສະຫລາກເປັນບຸນກ່ຽວຂ້ອງກັບວິຖີຊີວິດຄົນລາວ ທີ່ເຮັດການກະເສດເພາະຂອງທີ່ເອົາໄປທານລ້ວນແຕ່ແມ່ນຜົດຜົນການກະເສດ.

ບຸນຫໍ່ເຂົ້າສະຫລາກເປັນການສະຫລຸບຜົນການປູກຝັງຄັ້ງທີ 2 ຕໍ່ຈາກເຂົ້າປະດັບດິນ ວ່າການປູກຝັງປີນີ້ຈະໄດ້ຜົນດີພຽງໃດ ປຽບທຽບໃສ່ປີຜ່ານມາ. ພ້ອມນີ້, ບຸນຫໍ່ເຂົ້າສະຫລາກ ຍັງມີຄວາມໝາຍເຖິງປະຊາທິປະໄຕ ຄວາມສະເໝີພາບທາງພຸດທະສາດສະໜາ ເພາະວ່າເວລາຊາວບ້ານເຮັດກວຍສະຫລາກໄປຖະຫວາຍແກ່ພະສົງແລ້ວ ເພິ່ນຈະຂຽນໂຕເລກຕິດໃສ່ແຕ່ລະກວຍສະຫລາກນັ້ນແລ້ວຂຽນເລກອີກຊຸດໜຶ່ງຫໍ່ພັບໄວ້ໃສ່ໃນບາດໃຫ້ເທົ່າກັບຈຳນວນຂອງທານ ແລະ ພະສົງພາຍໃນວັດ ແລ້ວເພິ່ນຈະໃຫ້ພະ-ຈົວທຸກອົງໄດ້ຈັບເອົາສະຫລາກໃນບາດ ອົງໃດຖືກເລກໃດກໍໄປເລືອກເອົາຕາມເລກທີ່ຕິດໃວ້ຢູ່ກວຍສະຫລາກ, ການເຮັດແບບນີ້ຂອງສັງຄົມພະສົງ ມັນບົ່ງບອກຄວາມສະເໝີພາບບໍ່ວ່າພະຜູ້ໃຫຍ່-ຜູ້ນ້ອຍກໍມີສິດເທົ່າທຽມກັນ;

ບຸນຫໍ່ເຂົ້າສະຫລາກຍັງມີນິທານກ່ຽວຂ້ອງກັບການລ້ຽງຜີຕາແສກເພື່ອຂໍຟ້າຝົນໃຫ້ຕົກຖືກຕ້ອງຕາມລະດູການ ນີ້ກໍແມ່ນຈຸດໜຶ່ງທີ່ບອກເຖິງປະເພນີ-ວິຖີຊີວິດຄົນລາວກ່ຽວຂ້ອງຜົວພັນກັບພະພຸດທະສາດສະໜາ (ການໃຫ້ທານ, ຮັກສາສິນ) ແລະ ການກະເສດປູກຝັງ, ສຸດທ້າຍຍັງມີສິ່ງທີ່ໜ້າຄິດ ພໍຮອດປາງບຸນຍາມໃດຊາວບ້ານບາງຄົນໃສ່ບາດແລ້ວກັບເຮືອນ ຜັດພາກັນຕັ້ງວົງເຫລົ້າເບຍເປັນພຶດຕິກຳທີ່ໜ້າຄິດ!




**ກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ (ສະບັບປັບປຸງ)**

**ຄັດໂດຍ: ກົງທະນຸຄຳ ພິພັດເສລີ**

29. ການຂໍອຸທອນ ໝາຍເຖິງ ການທີ່ຄູ່ຄວາມ ຫລື ອົງການໄອຍະການ ບໍ່ພໍໃຈຕໍ່ຄຳຕັດສິນ ຂອງສານຂັ້ນຕົ້ນ ແລະ ໄດ້ຂໍອຸທອນ ຫລື ສະເໜີຄັດຄ້ານ;

30. ການຂໍລົບລ້າງ ໝາຍເຖິງ ການທີ່ຄູ່ຄວາມ ຫລື ອົງການໄອຍະການ ບໍ່ພໍໃຈຕໍ່ຄຳພິພາກສາຂອງສານຂັ້ນ ອຸທອນ ແລະ ໄດ້ຂໍລົບລ້າງ ຫລື ສະເໜີຄັດຄ້ານ;

# ອິນເດຍ ຫ້າມການຈູດບັ້ງໄຟດອກກ່ອນເທດສະການດິວາລີ

ແປ ແລະ ຮຽບຮຽງ: ທະນາກອນ



*ເທສະບານນະຄອນຫລວງນິວເດລີ ປະເທດອິນເດຍ ໄດ້ປະກາດຫ້າມຈູດບັ້ງໄຟດອກໃນຊ່ວງເທດສະການດິວາລີ ຍ້ອນເຫດຜົນດ້ານສິ່ງແວດລ້ອມ.*

ໃນວັນທີ 7 ກັນຍານີ້ ທ່ານ ໂກປາລ ຣາຍ ລັດຖະມົນຕີວ່າການກະຊວງສິ່ງແວດລ້ອມ ເທສະບານນະຄອນຫລວງນິວເດລີ ໄດ້ປະກາດຫ້າມບໍ່ໃຫ້ເກັບຮັກສາ, ຈຳໜ່າຍ ແລະ ຈູດບັ້ງໄຟດອກຢູ່ໃນນະຄອນຫລວງນິວເດລີ ກ່ອນທີ່ຈະເຖິງງານເທດສະການດິວາລີ (Diwali) ເນື່ອງຈາກຄວາມກັງວົນກ່ຽວກັບມົນລະພິດທາງອາກາດ ໂດຍມາດຕະການດັ່ງກ່າວຈະມີຜົນບັງຄັບໃຊ້ຈົນຮອດວັນທີ 1 ມັງກອນ 2023.

ນິວເດລີ, ເປັນເມືອງໜຶ່ງທີ່ມີມົນລະພິດຫລາຍທີ່ສຸດໃນໂລກ ຢູ່ພາຍໃຕ້ຄຳສັ່ງຫ້າມບໍ່ໃຫ້ຈູດບັ້ງໄຟດອກໃນນະຄອນຫລວງເປັນປີທີ 3 ຕິດຕໍ່ກັນແລ້ວ ທັງນີ້, ນະຄອນຫລວງຂອງອິນເດຍ ໄດ້ປະເຊີນຄວັນໝາແຜ່ລາມໄປທົ່ວເມືອງ ແລະ ເຂດຊານເມືອງທັນທີຫລັງຈາກຄືນຂອງການສະເຫລີມສະຫລອງເທດສະການດິວາລີໃນໄລຍະຫລາຍປີຜ່ານມາ ເຊິ່ງຄຸນນະພາບອາກາດທີ່ບໍ່ດີດັ່ງກ່າວ ສົ່ງຜົນໃຫ້ລະດັບມົນລະພິດທາງອາກາດຢູ່ໃນລະດັບ "ພາວະສຸກເສີນຮ້າຍແຮງພິເສດ".

ທັງນີ້, ເທດສະການດິວາລີ ເປັນເທດສະການແຫ່ງແສງຂອງຊາວຮິນດູ ການສະເຫລີມສະຫລອງແມ່ນກຳນົດຈະເລີ່ມຕົ້ນໃນເດືອນໜ້າ ແລະ ການຈູດບັ້ງໄຟເປັນສ່ວນໜຶ່ງໃນການສະເຫລີມສະຫລອງເທດສະການນີ້.

**ແຫລ່ງຂໍ້ມູນ: Xinhua**










# ຜົນການສຶກສາຊ່ອງວ່າງລາຍໄດ້ລະຫວ່າງເພດ ຕາມການສະເໜີຂອງລັດຖະສະພາສະວິດ

ແປ ແລະ ຮຽບຮຽງ: ນາກ ເມືອງມະໂນ

*ບົດລາຍງານທີ່ຮັບຮອງໂດຍລັດຖະບານ ສະແດງໃຫ້ເຫັນຊ່ອງວ່າງລະຫວ່າງເພດ ເຊິ່ງແມ່ຍິງໃນສະວິດເຊີແລນມີລາຍໄດ້ໜ້ອຍກວ່າຜູ້ຊາຍ ລວມທັງການເບີກເງິນບຳນານກໍໜ້ອຍກວ່າ ອີງຕາມອັດຕາສ່ວນຈຳນວນຫລາຍຂອງແມ່ຍິງທີ່ເຮັດວຽກນອກເວລາ.*

ອີງຕາມການລາຍງານຂ່າວໃນວັນທີ 8 ກັນຍາຜ່ານມາ ໃຫ້ຮູ້ວ່າ: ລັດຖະສະພາໄດ້ສະເໜີຂໍໃຫ້ມີການສຶກສາຊ່ອງວ່າງລາຍໄດ້ລະຫວ່າງເພດ (ຈີໂອຈີອີ) ເຊິ່ງໃນປີ 2019 ລັດຖະບານໄດ້ມີການສຶກສາບັນຫາດັ່ງກ່າວສະແດງໃຫ້ເຫັນວ່າ: ສະວິດເຊີແລນປະຕິບັດໄດ້ບໍ່ດີເທົ່າທີ່ຄວນ ໃນພາກພື້ນເອີຣົບ.

ສູນສະຖິຕິຂອງລັດຖະບານສະວິດເຊີແລນ ກ່າວໃນຖະແຫລງການວ່າ: ໃນປີ 2018 ຈີໂອຈີອີ ສຳລັບສະວິດເຊີແລນແມ່ນ 43,2% ໝາຍຄວາມວ່າ ລາຍໄດ້ຂອງແມ່ຍິງແມ່ນຕໍ່າກວ່າເພດຊາຍ 43% ຂອງທຸກໆຊົ່ວໂມງເຮັດວຽກສຳລັບຄົນທີ່ມີອາຍຸລະຫວ່າງ 15-64 ປີ.

ບົດລາຍງານຍັງໄດ້ພົບເຫັນວ່າ: ໃນປີ 2020 ຊ່ອງວ່າງເງິນບຳນານລະຫວ່າງເພດຂອງສະວິດເຊີແລນແມ່ນ 34,6% ໂດຍອັດຕາເງິນບຳນານປະຈຳປີຂອງແມ່ຍິງສະເລ່ຍ 35.840 ຟຣັງສະວິດ (ປະມານ 1,3 ລ້ານບາດ) ຕໍ່າກວ່າ 18.924 ຟຣັງສະວິດ (ປະມານ 700,000 ບາດ) ສຳລັບເງິນບຳນານເພດຊາຍ ຈາກຜົນການສຶກສາດັ່ງກ່າວ ໄດ້ສະທ້ອນເຖິງຄວາມແຕກຕ່າງຂອງການມີສ່ວນຮ່ວມໃນການຈ້າງງານຂອງສະວິດເຊີແລນ.

ທັງນີ້, ຂໍ້ມູນດັ່ງກ່າວ ເປັນຂໍ້ມູນໜຶ່ງກ່ອນທີ່ຜູ້ມີສິດເລືອກຕັ້ງສະວິດເຊີແລນ ຈະຕັດສິນໃຈລົງປະຊາມະຕິໃນວັນທີ 25 ກັນຍານີ້ ເພື່ອປະຕິຮູບລະບົບເງິນບຳນານຂອງລັດ ໂດຍການເພີ່ມອາຍຸບຳນານຂອງແມ່ຍິງເປັນ 65 ເຊັ່ນດຽວກັບຜູ້ຊາຍ ແລະ ການເພີ່ມພາສີມູນຄ່າເພີ່ມ ເພື່ອຊ່ວຍສະໜອງທຶນໃນລະບົບຂ້າງເທິງ.

**ແຫລ່ງຂ່າວ: Daily News**







| ຜູ້ຊີ້ນຳ | ຄະນະຊ່ຽວຊານທີ່ປຶກສາ | ຫົວໜ້າບັນນາທິການ | ກອງບັນນາທິການ | ອອກແບບຈັດໜ້າ |
|---|---|---|---|---|
| ທ່ານ ສົງຄຳ ວົງພະຈັນ | ທ່ານ ສີສຸພັນ ແສງສະຫວັນ<br>ທ່ານ ວິເສດ ສະແຫວງສຶກສາ<br>ທ່ານ ຄຳວິສັນ ແກ້ວສຸວັນ | ທ່ານ ປອ. ພິດສະໄໝ ບຸນວິໄລ<br>ທ່ານ ຂັນທະວີ ວົງພະຈັນ | ທ່ານ ນາງ ກົງໃຈ ແສງອຳພັນ<br>ທ່ານ ນາງ ສຸພາວັນ ທອມສະນິດ<br>ທ່ານ ນາງ ປາກາລັກ ພົມມີໄຊ | ທ່ານ ນາງ ກຸກກິກ ບຸດດາໄຊ<br>ທ່ານ ສົມນຶກ ແກ້ວໄຊຍະຈັກ |